# ຄຳສອນຂອງພຣະພຸທສາສນາຄວນປະຕິບັດ

ທ່ານທັງຫລາຍຫວັງໃນປາຣມີ ໄດ້ປົກຄອງບ້ານເມືອງນັ້ນກໍ່ໃຫ້ເປັນຢ່າງນຶ່ງທີ່ຄວນຄິດ ເພາະວ່າບ້ານເມືອງປະກອບດວ້ຽບຸກຄົນແລະແຕ່ຣະບຸກຄົນຈະຕອ້ງທຳດວ້ຽຕົນເອງຕາມຫລັກຂອງພຣະພຸທສາສນາແລ້ວ ແຕ່ຣະຄົນຈະຕອ້ງການອັນໄດ ກໍ່ຕອ້ງການຄວາມສຸກຄືຄວາມສງົບແລະຄວາມສຸກສງົບນັ້ນຈະເກີດຂຶ້ນໄດ້ກໍ່ດວ້ຽຕົນເອງ ສະນັ້ນທີ່ຈະໃຫ້ຄົນອື່ນມາປົກປອ້ງຮັກສາກໍ່ເປັນສິ່ງທີ່ຍາກຖ້າຕົນເອງບໍ່ທຳອັນນີ້ ເປັນຂໍ້ທີ່ສຳຄັນຫລາຽໃນພຣະພຸທສາສນາແຕ່ການທີ່ຈະອາໃສຄົນອື່ນກໍ່ອາໃສໄດ້ໂດຍເບິ່ງຜູ້ອື່ນທີ່ປະຕິບັດດີປະຕິຊອບແລະຄອ່ຽຟັງທີ່ສິ່ງທີ່ຜູ້ອື່ນທີ່ເຮົາເຫັນວ່າປະຕິບັດດີປະຕິບັດຊອບໄດ້ເວົ້າໄດ້ແນະນຳດັ່ງນີ້ ກໍ່ເປັນສິ່ງທີ່ອາໃສຜູ້ອື່ນໄດ້ ສະນັ້ນກໍ່ຈະຕອ້ງພິຈາຣະນາຂອງຕົນເອງວ່າຜູ້ທີ່ມີໜ້າທີ່ຈະເບິ່ງການປະຕິບັດຫຼືຟັງຂໍ້ແນະນຳໃນການປະຕິບັດແລະທຳຕາມ ອັນນີ້ເປັນສິ່ງທີ່ຊວ່ຍໃຫ້ບຸກຄົນໄດ້ບັນລຸເຖິງຄວາມສຳເຣັຈແລະຄວາມສຸກໄດ້ ການປະຕິບັດເປັນສິ່ງທີ່ສຳຄັນຫລາຽຖ້າເລີ້ມສົນໃຈກໍ່ເລີ້ມທຳໄດ້ແລ້ວມາເຖິງບັນຫາຂອງພຣະພຸທສາສນາເປັນສິ່ງລຳບາກທີ່ສຸດ ທີ່ຈະເຫັນພຣະພຸທສາສນາແລະທີ່ຈະເຫັນປະໂຍດຂອງພຣະພຸທສາສນາເພາະແຕ່ຣະຄົນກໍ່ມີກາຍແລະໃຈຂອງຕົນແຕ່ຣະຄົນມີຄວາມຮູ້ຫຼືປະຕິບັດສັດທາຂອງຕົນແລ້ວແຕ່ຜູ້ມີແຕ່ຂັ້ນການທີ່ຈະປະຕິບັດຕາມພຣະພຸທສານານັ້ນຍອ່ມຈະເປັນແລ້ວແຕ່ບຸກຄົນແລ້ວແຕ່ສະພາບຂອງຕົນຖານະນີ້ບໍ່ໄດ້ໝາຽເຖິງຖານະທາງການເງີນການທອງຫຼືຄວາມເປັນຢູ່ ແຕ່ໝາຽເຖິງຖານະຂອງຈິດໃຈຂອງແຕ່ລະຄົນສະນັ້ນຖ້າວ່າໄປພຣະພຸທສານາເປັນສິ່ງທີ່ລຸ່ມເລິກທີ່ລຳບາກທີ່ຈະສັ່ງສອນຫຼືທີ່ຈະຮຽນເພາະວ່າແຕ່ຣະຄົນຈະຕອ້ງທຳຕາມຖານະຂອງຕົນ ຫຼືຈະວ່າໄດ້ວ່າພຸທສານາມີຫລາຽສນິດແຕ່ລະຄົນກໍ່ມີພຸທສາສນາຂອງຕົນ ສະນັ້ນການທີ່ຈະສັ່ງສອນການທີ່ຈະຊີ້ແຈ່ງການທີ່ຈະຟັງການທີ່ຈະຮຽນພຸທສາສນານັ້ນຈະຕອ້ງພະຍາຍາມທີ່ຈະທຳດວ້ຽຕົນເອງ ການປະຕິບັດນັ້ນກໍ່ເປັນສິ່ງທີ່ສຳຄັນຫລາຽໂດຍສວ່ນຫລາຽເວົ້າເຖິງການປະຕິບັດກໍ່ກົວກັນເພາະການປະຕິບັດນັ້ນມີວິທີຕາ່ງ ໆແລ້ວໂດຍສວ່ນຫລາຽວິທີຕາ່ງໆນັ້ນບັນຣະຍາຍກັນມາວ່າຕອ້ງທຳຢ່າງນັ້ນທຳຢ່າງນີ້ ຕອ້ງທໍຣະມານຕອ້ງເມື່ອຍຕອ້ງເສັຽເວລາຫລາຽບໍ່ ສາມາດທີ່ຈະຝຶກຕົນອອກມາປະຕິບັດຄວາມຈິງ ການປະຕິບັດພຣະພຸທ ສາສນາຕາມຄຳສັ່ງສອນຂອງພຣະພຸທເຈົ້ານັ້ນບໍ່ໄຊ້ຂອງຍາກແຕ່ຣະຄົນທຳໄດ້ທັງນັ້ນແຕ່ວ່າຈະຕອ້ງມີຄວາມຕັ້ງໃຈເມື່ອເຮົາຢາກປະຕິບັດທັມມີຄວາມຍາກແລ້ວກໍ່ໝາຽຄວາມວ່າເຮົາຍິນດີ ເຮົາຢາກທີ່ຈະປະຕິບັດມີຂໍ້ນີ້ເປັນຕົນ ຖ້າເຮົາສົນໃຈພຣະພຸທສາສນາແລະປະຕິບັດທັມ ຂອງພຣະພຸທສາສນາເລີ້ມສົນໃຈກໍ່ເລີ້ມທຳໄດ້ແລ້ວເພາະວ່າຄົນເຮົາບໍ່ຢາກປະຕິບັດຄືກຽດປະຕິບັດຫຼືບໍ່ຄິດອາ່ນ

ທີ່ຈະປະຕິບັດ ກໍ່ຍອ່ມບໍ່ໄດ້ປະຕິບັດເມື່ອບໍ່ໄດ້ປະຕິບັດແລ້ວຄວາມມືດກໍ່ຄອບຄຸມ ເພາະວ່າບໍ່
ໄດ້ເປີດໄຟ ຊົ່ວປຽ່ບການປະຕິບັດເໝືອນການເປີດໄຟ ເມື່ອໄຟສວ່າງກໍ່ພໍໃຈແລະສະບາຍໃຈ
ຈຶ່ງເອີ້ນວ່າສັນທະ-ແຕ່ຖ້າເຮົາຢາກຂຶ້ນມາແລະຢາກເຫັນວ່າສາສນານີ້ເປັນສິ່ງທີ່ມີປະໂຍດ
ກໍ່ຍອ່ມເປັນການເປີດໄຟແມ່ນຈະມືດກໍ່ເປັນຄວາມສວ່າງໃຫ້ເຫັນ ຢ່າງເຊັ່ນເຮົາເຂົ້າໄປໃນ
ຫ້ອງທີ່ມືດແລ້ວເຮົາກໍ່ບໍ່ຮູ້ຈັກຫ້ອງນັ້ນບໍ່ຊາບວ່າສະວິກໄຟຢູ່ໃສ ເຮົາມີໄຟສາຍແລ້ວເຮົາກໍ່
ເປີດໄຟສາຍ ໃສ່ບອ່ນອັນມືດນັ້ນ ຖ້າບໍ່ເຍືອງໄຟເປັນແສງສວ່າງໄປຫາສະວິກໄຟຖ້າເຮົາບໍ່
ໄປຫາສະວິກໄຟ ເຮົາກໍ່ບໍ່ສາມາດທີ່ຈະເປີດໄຟຢູ່ໃນຫ້ອງນັ້ນຄືມີດອດໄຟມີສາຍໄຟມີສະວິກ
ໄຟຄົບຖ້ວນໃນຫ້ອງນັ້ນເຮົາບໍ່ ສາມາດຈະພົບນອກຈາກບັງເອີນໂດຍບັງເອີນເຮົາໄປເຕາະ
ສະວິກໄຟ ແລ້ວກໍ່ເປີດຂຶ້ນມາແຕ່ວ່າໂດຍສ່ວນຫລາຍກໍ່ຕ້ອງທຳ ເມື່ອຫາໄດ້ແລ້ວດວ້ຽໄຟ
ເຮົາ ຕ້ອງຕັ້ງໝັ້ນຢູ່ກັບຕົນກໍ່ສາມາດໄປເປີດໄຟໄດ້ສ່ວນໄຟນີ້ຄືການສົນໃຈເບື້ອງຕົ້ນເມື່ອ
ເຮົາໄປເປີດໄຟແລ້ວກໍ່ຈະສວ່າງຂຶ້ນມາ ຖ້າມັນສວ່າງໄຟທີ່ຢູ່ໃນຫ້ອງນັ້ນ ອາດບໍ່ສວ່າງເຕັມ
ທີອາດມີຫລາຍເຫ່ງຖ້າເປີດໄຟອັນນັ້ນກໍ່ມີຄວາມປີຕິຍິດດີແລ້ວ ກໍ່ເປັນອັນວ່າເຮົາພໍໃຈໃນ
ການປະຕິບັດເຊັ່ນນັ້ນ ຄືເຮົາຕ້ອງເປີດສະວິກໄຟມັນຈຶ່ງມີຄວາມສວ່າງດີ ເປີດສວ່າງດີກໍ່
ຍອ່ມມີຄວາມພໍໃຈແລະສະບາຍໃຈມີຄວາມມ່ວນຊື່ນໃຈອັນນີ້ຄືຄວາມສະບາຍໃຈເບື້ອງຕົ້ນ
ອັນນີ້ເປັນປັດໃຈສຳຄັນຂອງການປະຕິບັດພຸທສາສນາທ່ານເອີ້ນວ່າ-ສັນທະ -ສັນທະຄືຄວາມ
ພໍໃຈໃນການປະຕິບັດ ມີຄວາມພໍໃຈໃນການຄົ້ນຄວ້າຄວາມພຽນຄວາມອົດທົນຄວາມເອົາ
ໃຈໃສ່ແລະທົບທວນ ທຳໃຫ້ການປະຕິບັດກ້າວໜ້າເມື່ອມີຄວາມພໍໃຈໃນການຄົ້ນຄວ້າເຮົາ
ກໍ່ຕ້ອງຄົ້ນຄວ້າຕໍ່ໄປບໍ່ໄຊ້ພໍໃຈພຽງທີ່ນັ້ນ ເພາະວ່າຄວາມສວ່າງຄວາມດີຄວາມສຸກຄວາມ
ພໍໃຈໃນການປະຕິບັດນັ້ນຍັງມີອີກຫລາຍກໍ່ຕ້ອງພຽນ ທີ່ຈະປະຕິບັດງານຂອງພຸທສາສນາ
ອັນນີ້ກໍ່ຕ້ອງມີ-ວິຣິຍະ-ສິ່ງນີ້ເປັນສິ່ງສຳຄັນຫລາຍເມື່ອເລີ້ມຕົ້ນແລ້ວຕ້ອງມີວິຣິຍະໝາຍ
ຄວາມວ່າຕ້ອງພຽນຕ້ອງມີຄວາມຂຍັນ ວິຣິຍະ ນີ້ຄູ່ກັບຂັນຕິ ຄືຄວາມອົດທົນບາງທີ່ເວລາ
ເຮົາທຳງານອັນໃດກໍ່ຕາມໃນທາງໂລກທາງທັມເຮົາທຳງານແລ້ວເໜື່ອຍ ເມື່ອເໜື່ອຍກໍ່
ຕ້ອງມີຄວາມອົດທົນ ໃນຄວາມເໜື່ອຍນັ້ນກໍ່ຕ້ອງມີຄວາມພຽນທີ່ຈະປະຕິບັດຕໍ່ໄປ ສະນັ້ນ
ເວົ້າໄປ ກໍ່ຕ້ອງເປັນວ່າຄວາມພຽນກັບຄວາມອົດທົນນັ້ນເປັນສິ່ງສຳຄັນທີ່ສຸດທີ່ຈະທຳໃຫ້
ງານໄດໆ ບັນລຸຜົນໄດ້ ເມື່ອມີຄວາມອົດທົນແລ້ວສິ່ງອື່ນກໍ່ມາແຕ່ໃນຄວາມພຽນໃນຄວາມ
ອົດທົນນີ້ກໍ່ຕ້ອງມີການເອົາໃຈໃສ່ ເອົາໃຈໃສ່ນັ້ນຄື ຕ້ອງຕິດຕາມຢູ່ຕຣອດເວລາ ວ່າງານ
ຂອງເຮົາໄປເຖິງໃສແລ້ວແລະກໍ່ບໍ່ຄວນຈະເສີຍ ຕ້ອງໃຫ້ມີການເບິ່ງຕິດຕາມບໍ່ມີຂາດ-ເມື່ອ
ປະຕິບັດເຊັ່ນນັ້ນກໍ່ຍິ່ງກ້າວໜ້າໄປໃຫ່ຽໃນງານຕ່າງໆ ກໍ່ຈະມີຄວາມສຳເຣັຈໄດ້

ບໍ່ໄຊ້ແຕ່ໃນງານທາງພຣະພຸທສາສນາເທົ່ານັ້ນ ສ່ວນງານອື່ນໆແລະງານໄດໃນໂລກງານໃນໜ້າທີ່ຫຼືງານໃນທາງສ່ວນຕົວງານທຸກຢ່າງນັ້ນຈະກ້າວໜ້າໄປໄດ້ໂດຍດີ ຈະໄປໄດ້ຢ່າງມີປະສິດທິພາບແລະຈະວ່າລາບລື້ນໄດ້ ເພາະວ່າແມ່ນຈະມີອຸປສັກ ອຸປສັກເຫລົ່ານັ້ນບໍ່ໄຊ້ອຸປສັກທີ່ຈະຂ້າມບໍ່ໄດ້ ຖ້າມີຄວາມພຽນຄວາມອົດທົນຄວາມເອົາໃຈໃສ່-ການປະຕິບັດງານຈະຕອ້ງທົບທວນຢູ່ສເມີເບິ່ງໃຫ້ຊັດວ່າງານທີ່ເຮົາທຳໄປມັນໄປເຖິງໃສງານ ນັ້ນໄປໃນທາງທີ່ຖືກຕອ້ງຫຼືບໍ່ເພາະບາງທີຖ້າມີຄວາມອົດທົນມີຄວາມ ພາກພຽນແລະມີຄວາມເອົາໃຈໃສ່ ອາຈເອົາໃຈໃສ່ຢ່າງບໍ່ຖືກຕອ້ງຄືເຊັ່ນດຽວກັບການເດີນທາງໄປບອ່ນໄດ ໃນສມັຍນີ້ຕອ້ງແລ່ນຣົດ ແຕ່ເຮົາກໍ່ຕອ້ງແລ່ນຣົດໄປຕາມທາງ ຖ້າມີທາງແຍກຢູ່ໃສເຮົາກໍ່ເຫັນວ່າທາງນີ້ ຖືກຕອ້ງແລ້ວແຕ່ວ່າອັນແທ້ຈິງເຮົາເລີຍຜິດອາຈເປັນໄດ້ ເພາະເບິ່ງທາງບໍ່ເປັນເຊັ່ນນັ້ນກໍ່ຈະຕອ້ງທົບທວນຢູ່ວ່າທາງນັ້ນຖືກຕອ້ງຫຼືບໍ່ອັນທີ່ກ່ອນມານີ້ ກໍ່ເປັນທາງທີ່ຈະໃຫ້ໄດ້ປະຕິບັດງານຂອງທັມເມື່ອປະຕິບັດພຸທສາສນາ ໃນທາງທີ່ເອີ້ນວ່າ-ປະຕິບັດເຣີ້ມຕົ້ນຕົງນີ້ຢ່າງນີ້ແລະທີ່ວ່ານີ້ກໍ່ຈະເປັນ ປະໂຍດສຳຫລັບການປະຕິບັດງານທຸກຢ່າງບໍ່ໄຊ້ງານຂອງການປະຕິ ບັດທັມເປັນປະໂຍດສຳຫລັບການປະຕິບັດງານຂອງຕົນທັງເດັກນອ້ຍທັງຜູ້ໃຫ່ຽແລະທັງຜູ້ຍິງຜູ້ຊາຍ ມີປະໂຍດທັງນັ້ນໃຜມີໜ້າທີ່ອັນໄດມີງານອັນໄດຖ້າທຳຕາມຫລັກນີ້ກໍ່ມີຄວາມສຳເຣັດແທ້ໆແລະບອກວ່າແທ້ບໍ່ໄຊ້ອາຈເປັນສິ່ງທີ່ແທ້ເພາະວ່າຈິດໃຈຂອງເຮົາ ຈະໄດ້ປະຕິບັດໃນທາງທີ່ຖືກ ຄາວນີ້ກໍ່ຍັງບໍ່ໄດ້ເວົ້າເຖິງວ່າ-ພຸທສາສນານີ້-ປະຕິບັດຢູ່ໃສ-ປະຕິບັດຢ່າງໄດເພາະວ່າຄົນທີ່ສຶກສາພຣະພຸທສາສນາຫຼືມາຕັ້ງເປັນພຸທສມາຄົມ ຫຼືເປັນກຸ່ມສຶກສາພຸທສາສນາ ບາງທີກໍ່ຍັງບໍ່ຊາບວ່າການປະຕິບັດນັ້ນເລີ້ມຢູ່ໃສ ເພາະທີ່ເວົ້າເຖິງວິທີການທີ່ຈະປະຕິບັດໄດ້ນັ້ນກໍ່ບໍ່ໄດ້ບອກວ່າເຣີ້ມປະຕິບັດຢູ່ໃສ ນອກຈາກມາປຽ່ນທຽບວ່າເຂົ້າໄປຫາສະວິກໄຟເພື່ອຈະເປີດໃຫ້ຄວາມແຈ້ງສວ່າງແລະເມື່ອມີຄວາມແຈ້ງສວ່າງແລ້ວກໍ່ເບິ່ງທາງໄດ້ແລະໄປເບິ່ງທາງທີ່ຈະທຳໃຫ້ແຈ້ງສວ່າງດີຂຶ້ນ ແລະສະວິກໄຟນັ້ນຢູ່ບອ່ນໄດ ຄືສະວິກໄຟນັ້ນເຮົາເອົາແສງໄຟເທົ່າທີ່ເຮົາມີນັ້ນໄປສາຍ ແລ້ວກໍ່ໄປເປີດສະວິກໄຟ ສ່ວນສະວິກໄຟນີ້ຄືອັນໄດ ເພາະທ່ານເວົ້າຢູ່ສເມີວ່າພຣະພຸທສາສນານັ້ນເມື່ອໄດ້ປັນຍາກໍ່ມີຄວາມແສງສວ່າງ ເມື່ອປະຕິບັດທັມກໍ່ໄດ້ປັນຍາໄດ້ແສງສວ່າງ ປັນຍານັ້ນເບິ່ງແລ້ວກໍ່ຈະເປັນສະວິກໄຟ-ແຕ່ຖ້າເບິ່ງໆ ໄປປັນຍານີ້ເປັນປັນຍາອັນໄດ ປັນຍານີ້ກໍ່ເປັນປັນຍາໃນທັມນີ້ ປັນຍາໃນທັມບໍ່ໄຊ້ສະວິກໄຟນັ້ນຈະພົບຢ່າງໄດ ແຕ່ການທີ່ຈະບອກວ່າສະວິກໄຟຄືອັນໄດນັ້ນ-ກໍ່ຄືໃຈເຮົາໃຈຫຼືຈິດ-ຈິດຫຼືໃຈກໍ່ໄດ້ແລ້ວບາງທີທ່ານກໍ່ເອີ້ນວ່າຈິດ ບາງທ່ານກໍ່ເອີ້ນວ່າໃຈ

ບາງທ່ານກໍ່ບອກວ່າຈິດຄືໃຈບາງທ່ານກໍ່ບອກວ່າຈິດບໍ່ແມ່ນໃຈຫຼືບາງທ່ານກໍ່ບອກວ່າຈິດຄືເປັນອາການຂອງໃຈ-ອາການຂອງໃຈນີ້ແປລວ່າອັນໄດ-ແປລວ່າ-ໃຈເປັນສິ່ງທີ່ເຮົາມີທຸກຄົນ ເປັນສິ່ງທີ່ເຮົາບໍ່ເຫັນເປັນສິ່ງທີ່ຄົນອື່ນບໍ່ເຫັນ ແຕ່ວ່າໃຈນີ້ຈະເປັນຜູ້ບົງການ-ການກະທຳຂອງເຮົາທັງຫລາຽ ຈຶ່ງຕອ້ງພະຍາຍາມເບິ່ງ ແຕ່ຖ້າໃຈນີ້ເຮົາເບິ່ງບໍ່ເຫັນ ຖ້າເບິ່ງດວ້ຽຕາ ດວ້ຽຕາທີ່ແຜມເບິ່ງພູມີປະເທດເບິ່ງໃຜຕໍ່ໃຜນັ້ນ ເບິ່ງຕຶກເບິ່ງອາຄານນັ້ນ ຕານັ້ນຈະບໍ່ເຫັນທ່ານກໍ່ເອີ້ນວ່າໃຈນັ້ນຄືຄວາມຮູ້ຕາໃຈນັ້ນກໍ່ຄືເປັນສິ່ງຈະໄຊ້ສະຫລັບໄດ້ປັນຍາໄດ້ເຫັນແຈງສວ່າງປັນຍາ-ຄາວນີ້ເຮົາກໍ່ເຈີະແລ້ວວ່າສ່ວນນຶ່ງຂອງສະວິກໄຟຫຼືສ່ວນນຶ່ງ ຂອງກົນໄກ ທີ່ຈະໃຫ້ສວ່າງຄືໃຈໃຂນີ້ ເມື່ອຢາກຮູ້ກໍ່ຈະຕອ້ງປະຕິບັດຫລາຽຢ່າງ ຕອ້ນແລກເຮົາຈະບໍ່ສົນໃຈເພາະວ່າ ເມື່ອເຮົາເບິ່ງໄປເຮົາກໍ່ເກີດຄວາມຟຸ້ງຊ່ານເຮົາກໍ່ເກີດຄວາມຮູ້ສຶກໂລບຮູ້ສຶກອາຈຮ້າຍດວ້ຽຊ້ຳ ຈຶ່ງໃຫ້ມີສິ່ງປິດຄື ປິດໃນສິ່ງທີ່ທ່ານເອີ້ນວ່າ-ໂມຫະ-ຄືຄວາມໂງ່ຄວາມບໍ່ຮູ້ຫຼືຮູ້ບໍ່ຈິງມັນປິດບັງໃຈແລະປິດບັງຄວາມຈິງ ສະນັ້ນຈະຕອ້ງຫາທາງທີ່ຈະເປີດ ຖ້າເປີດເທິງນັ້ນ ເມື່ອເປີດເທິງນັ້ນກໍ່ຈະຕອ້ງພະຍາຍາມທີ່ຈະເຮັດໃຫ້ໃຈນີ້ສງົບ ອັນນີ້ກໍ່ມາເຖິງເອີ້ນວ່າ-ສະມະຄະ-ຫຼື ສະມາທິຊຶ່ງເປັນສິ່ງທີ່ບໍ່ໄດ້ໝ້າກວາເທົ່າທີ່ວ່າ ບາງຄົນກໍ່ບອກວ່າການນັ່ງສມາທິນີ້ຣະວັງດີໆ ອາຈເປັນບ້າກໍ່ໄດ້ອາຈແຢ້ລຳບາກບໍ່ມີທາງທີ່ຈະທຳໝ້າກວາ ແຕ່ວ່າ-ສມາທິນີ້ ກໍ່ຕອ້ງເດີ້ມຢ່າງເບົາໆກອ່ນ ຄືວ່າຈະຕອ້ງມີຄວາມຕັ້ງໃຈໃຫ້ຈິດໃຈນີ້ບໍ່ໄປເກາະກວ່ອກັບອັນໄດກໍ່ຕາມໝາຽຄວາມວ່າຈະຕອ້ງເດີ້ມຕົ້ນດວ້ຽການປັດກວາດສິ່ງທີ່ເປັນມານຫຼືຈະເປັນສິ່ງທີ່ຄຸມບໍ່ເຮັດໃຫ້ສງົບໄດ້ ບໍ່ເຮັດໃຫ້ເກີດຄວາມນີ້ງແນ່ໄດ້ ການທີ່ຈະໃຫ້ເກີດຄວາມສງົບຄືສມາທິນີ້ ຈຶ່ງຕອ້ງພະຍາຍາມເບິ່ງໃຫ້ເຫັນວ່າອັນໄດມາປິດບັງ ເມື່ອຖອນສິ່ງທີ່ປິດບັງນັ້ນທັນໄດກໍ່ໄດ້ສມາທິໂດຍຫລາຽ ເຮົາຈະເຮັດອັນໄດເຮົາກໍ່ຄິດເຖິງອັນໄດສາຣະພັດບໍ່ແນ່ຄື ໝາຽຄວາມວ່າ ເຮົາໄປຄິດເຮື້ອງອື່ນຢ່າງສົມມຸດ ເຮົາຈະເດີນໄປໃສ ຖ້າສົມມຸດວ່າເຮົາລຸກຂຶ້ນຢືນ ແລ້ວກໍ່ຍ່າງອອກຈາກຫອ້ງເຂດນີ້ ເຮົາບໍ່ເຫັນປະຕູເຮົາບໍ່ເຫັນອັນໄດ ເຮົາຈະຕອ້ງຖອນສິ່ງທີ່ຢູ່ຂ້າງໝ້າຕາເຮົາກອ່ນ ແລ້ວທັນໄປໃນທາງທີ່ຈະເປັນສິ່ງທີ່ເໝາະສົມ ໃນການກະທຳຄືປະຕູສົມມຸດວ່າເຮົາເບິ່ງຝາຜນັງຫຼືເບິ່ງຜ້າແພກັ້ງຫຼືເບິ່ງແຜດານສິ່ງເຫລົ່ານັ້ນມັນມີປິດບັງມັນບໍ່ເຫັນປະຕູ ເຮົາກໍ່ຈະຕອ້ງເອົາຈິດໃຈຂອງເຮົາເອົາອອກໄປຈາກຝາຜນັງຫຼືອອກຈາກແຜດານຫຼືອອກຈາກຜ້າກັ້ງເອົາໄປທີ່ປະຕູ ໝາຽຄວາມວ່າຂັ້ນແລກເຮົາຕອ້ງການປະຕູ ເຮົາກໍ່ຖີ້ມຝາຜນັງຫຼືແຜດານຫຼືຜ້າກັ້ງທີ່ເຮົາກຳລັງເບິ່ງ ໝາຽຄວາມວ່າສິ່ງທີ່ກີດຂວາງບໍ່ໃຫ້ສາມາດແຜມ ທີ່ຈະໄດ້ເຫັນສິ່ງທີ່ເຮົາຕອ້ງການ-ຖ້າເຮົາບອກວ່າເຮົາ

ເບິ່ງຝາຜນັງເບິ່ງເພດານເບິ່ງພັງກັ້ງແລ້ວ ເຮົາກໍ່ບໍ່ມີທາງທີ່ຈະເບິ່ງປະຕູໄດ້ ແຕ່ວ່າຖ້າເຮົາຕັດສິນໃຈປັບວ່າ ຕອນນີ້ບໍ່ໄຊ້ພາຣະຂອງເຮົາທີ່ຈະເບິ່ງເພດານເບິ່ງຝາຜນັງຫຼືເບິ່ງອັນໄດ ເປັນພາຣະໄປຫາປະຕູ ເຮົາກໍ່ຈະຖອນອອກມາຈາກສິ່ງທີ່ເຮົາກຳລັງທຳຢູ່ ສ່ວນຫລາຽເຮົາກໍ່ມີຄວາມມັກອັນໄດ ກໍ່ເອີ້ນວ່າ-<u>ການຣາຄະ</u>-ມີ-<u>ໂທສະ</u>-ຄືພະຍາບາດຫຼືບາງທີກໍ່ບໍ່ໄຊໂທສະ ຫຼືຣາຄະອັນໄດມີຄວາມຟຸ້ງຊ່ານເພາວງກວາຍໄປບອ່ນຫັ້ນບອ່ນນີ້ ຄືອັນນີ້ກໍ່ບໍ່ເອົາອັນນັ້ນກໍ່ບໍ່ເອົາ ມັນບໍ່ມີທາງທີ່ຈະມີຄວາມສງົບຫຼືບາງທີເຮົາກໍ່ພະຍາຍາມຄວາມສງົບເຮົາບໍ່ມີຄວາມພຽນພໍ ເຮົາມັນງວ້ງເຮົາມັນຫາວບາງທີເຮົາກໍ່ເກີດມີສິ່ງທີ່ເຮັດໃຫ້ບໍ່ສາມາດມັນຍໍຫຍອ່ນ ບາງທີກໍ່ບໍ່ເຊື່ອວ່າມີປະຕູອີກຊ້ຳເຮົາຕອ້ງປັດກວາດຄວາມລັງເລສົງໃສອັນໄດຕ່າງໆ ເລົ່ານີ້ສິ່ງທີ່ບໍ່ດີຄືສິ່ງທີ່ທຳໃຫ້ຟຸ້ງຊ່ານທຳໃຫ້ເຮົາບໍ່ສາມາດທີ່ຈະທຳໃຈໃຫ້ນິ້ງໆ ເພາະວ່າມີສິ່ງທີ່ມາປິດບັງດັ່ງນີ້ ແຕ່ຖ້າເຮົາພະຍາຍາມທີ່ຈະເບິ່ງວ່າບໍ່ມີສິ່ງທີ່ປິດແລະກໍ່ບອກວ່າເອົາຕອນນີ້ມັນບໍ່ໄຊ້ເຣື້ອງບໍ່ໄຊ້ເວລາ ທີ່ຈະເອົາສິ່ງມາປິດບັງໃຫ້ຖອນປິດບັງເລົ່ານີ້ ເຮົາກໍ່ໄດ້ສະມາທິໄດ້ທັນທີເລີຍ ອັນນີ້ໄດ້ເອີ້ນວ່າສະມາທິ

(<u>ຈຸດເດີ້ມຕົ້ນຂອງການປະຕິບັດທັມຢູ່ທີ່ສວ່ນສະມາທິ ສິ່ງເຮົາມີທຸກຄົນ</u>)

ສວ່ນສະມາທິນັ້ນເຮົາອາຈໄດ້ເປັນເວລາພຽງເຄິ່ງວິນາທີ ມັນກໍ່ເປັນສະມາທິແລ້ວ ແຕ່ເປັນສະມາທິອອ່ນຫລາຽແຕ່ເປັນສະມາທິຂໍ້ສຳຄັນທີ່ຈະຕອ້ງໄດ້-ອັນນີ້ໃຫ້ວ່າສະມາທິຄືອັນໄດໂດຍສວ່ນຫລາຽຄົນເຮົາເມື່ອຍັງເປັນເດັກເປັນນັກຮຽນທ່ານກໍ່ສອນຄື ໝາຽຄວາມວ່າ ຄຣູບາອາຈານຫຼື ພໍ່ແມ່ກໍ່ສອນໃຫ້ຕັ້ງຈິດຕັ້ງໃຈຣຽນກໍ່ໝາຽຄວາມວ່າທຳສະມາທິນັ້ນເອງ ແລ້ວເຮົາກໍ່ຣຽນວ່າຖ້າເຮົາຕັ້ງໃຈໃນສິ່ງທີ່ນັ້ນໆ ໃຫ້ດີ ມັນກໍ່ເຮັດໄດ້ເອີ້ນວ່າມີສະມາທິ ເພາະວ່າຈິດເຮົາໄປເພິ່ງຢູ່ອັນດຽວ ແຕ່ຄົນເຮົາຖ້າບໍ່ມີສະມາທິເສັຽເລີຍໝາຽຄວາມວ່າເປັນຄົນຟຸ້ງຊ່ານແທ້ໆ ແລະເປັນຄົນທີ່ບໍ່ໄດ້ເຣື່ອງຈະຣຽນອັນໄດບໍ່ໄດ້ຈະເວົ້າກໍ່ບໍ່ໄດ້ບໍ່ມີທາງອັນໄດເລີຍຄືວ່າຂຶ້ນຊື່ວ່າເປັນຄົນບໍ່ມີສະມາທິບໍ່ໄຊ້ວ່າຄົນເຮົາ-ເຮົາເສັຽໃຈເຫຼືອເກີນວ່າເຮົາມັນຂາດສະມາທິ ຖ້າຄິດວ່າເຮົາຂາດສະມາທິເທົ່າກັບວ່າເຮົາບໍ່ມີສະມາທິຢູ່ແລ້ວ ເພາະຮູ້ວ່າມີຄຳວ່າສະມາທິເຮົາໄດ້ຣຽນຮູ້ແລ້ວຖ້າບໍ່ມີສະມາທິໃນໂຕເລີຍ ໝາຽຄວາມວ່າບໍ່ມີຄວາມດີເລີຍໃນໂຕ ກໍ່ບໍ່ສາມາດທີ່ຈະຄິດຈະມີຄວາມວ່າສະມາທິ)ສະນັ້ນ ຈຸດເດີ້ມຕົ້ນຂອງການປະຕິບັດທັມຢູ່ທີ່ໂຕສະມາທິນີ້ ຊຶ່ງເຮົາມີທຸກຄົນມີແຕ່ວ່າໃຫ້ເຫັນວ່າ ນີ້ເປັນຈຸດເດີ້ມຕົ້ນຂອງການປະຕິບັດທັມ ຄືຈາກສະມາທິເຮົາມີທັມມະດາໆ ທີ່ເມື່ອເຮົາຍັງເປັນເດັກໆ ຄຣູອາຈານແລະພໍ່ແມ່ໄດ້ສັ່ງສອນບອກວ່າຕອ້ງຕັ້ງໃຈຮ່ຳຣຽນ ແຕ່ອັນນີ້ກໍ່ເປັນຈຸດເດີ້ມຕົ້ນຂອງສະມາທິເພາະເຫດວ່າ

ການທີ່ຈະປັດກວາດສິ່ງທີ່ປິດກັ້ນສະມາທິ ທ່ານເອີ້ນວ່າ-ນິວອນ-ການປິດກັ້ນນີ້ເຮົາຈະເອົາອອກ ມັນຕອ້ງມີສະມາທິ-ເພື່ອໃຫ້ມີສະມາທິອັນນີ້ພວກເຮົາທີ່ຢາກຈະສຶກສາສະມາທິແລະສຶກສາການປະຕິບັດທັມຕິດຢູ່ທີ່ນີ້ ເພາະເຮົາໄປຫາອາຈານທ່ານບອກວ່າ ຕອ້ງທຳສະມາທິມີນິວອນ-5-ຢ່າງນັ້ນໆ ມີສິ່ງທີ່ປິດກັ້ນ ການຈະທຳໃຫ້ທີ່ປິດກັ້ນນັ້ນອອກ ຈະຕອ້ງຕັ້ງໃຈ ຕອ້ງມີສະມາທິເພື່ອຈະເອົາເຄື່ອງປິດກັ້ນນັ້ນອອກ ເຮົາກໍ່ງົງໂດຍ ສ່ວນຫລາຽບໍ່ມີທີ່ໃດທີ່ຈະສອນໃຫ້ທຳສະມາທິໂດຍໄດ້ບອກວ່າໃຫ້ເອົາ ເຄື່ອງປິດກັ້ນນີ້ອອກບອກວ່າຕອ້ງຣະງັບນິວອນທັງຊິ້ນກໍ່ໝາຽຄວາມວ່າ ການຣະງັບນິວອນຕອ້ງໄຊ້ອັນໃດກໍ່ຕອ້ງໄຊ້ສະມາທິ ຈະເຮັດຈັ່ງໃດໄກ່ຈະມາກອ່ນໄຂ່ ຫຼືໄຂ່ຈະມາກອ່ນໄກ່-ຄວາມຈິງໄຊ້ສະມາທິຣະງັບນິວອນແທ້ໆ ທ່ານບໍ່ໄດ້ເວົ້າຜິດແຕ່ວ່າເຮົາບໍ່ເຂົ້າໃຈບໍ່ເຂົ້າໃຈວ່າເຮົາຕອ້ງການສະມາທິແລ້ວເຮົາຕອ້ງໄຊ້ສະມາທິ ເພື່ອຣະງັບນິວອນຊຶ່ງເປັນສິ່ງທີ່ປິດກັ້ນສະມາທິເປັນສິ່ງທີ່ທຳບໍ່ໄດ້-ແຕ່ວ່າຖ້າເຂົ້າໃຈແລ້ວວາ່ ສະມາທິເຮົາມີຢູ່ທຸກຄົນເພາະສະນັ້ນເຮົາບໍ່ໄດ້ເກີດມາເປັນມະນຸດຖ້າເຮົາບໍ່ມີສະມາທິຫຼືທຶນເດີມ ເຮົາບໍ່ໄດ້ເກີດມາເປັນມະນຸດແລະບໍ່ໄດ້ເກີດມາເປັນມະນຸດທີ່ມີຄວາມສລາດຫລາຽຫຼືນອ້ຍກໍ່ແລ້ວແຕ່ ແຕ່ວ່າ ມີຄວາມສລາດມີຄວາມດີມີວາສນາທຸກຄົນມີຫລາຽຫຼືນອ້ຍເທົ່ານັ້ນເອງ ມີດີຫຼືຊົ່ວເທົ່ານັ້ນເອງແຕ່ເມື່ອເກີດມາເປັນມະນຸດກໍ່ເປັນສິ່ງທີ່ປະເສີດຫລາຽແລ້ວເຮົາເກີດມາເປັນມະນຸດເຮົາທຳສະມາທິໄດ້ເພາະເຫດວ່າເຮົາໄດ້ທຳມາແລ້ວເຮົາທຳມາຈົ່ນເຖິງເກີດມາເປັນມະນຸດເມື່ອເກີດມາເປັນມະນຸດກໍ່ມີຄວາມດີຢູ່ໃນໂຕ ຄວາມຊົ່ວກໍ່ມີແລ້ວກໍ່ສ່ວນຫລາຽໄຜໆກໍ່ວ່າມະນຸດມີກິເດດມີຄວາມຊົ່ວເລວຊາມຕ່າງໆ ຕອ້ງຄັນເກົາ ເຮົາກໍ່ທໍ້ວທົດເລີຍ ແຕ່ວ່າຄວາມຈິງບໍ່ເປັນເຊັ່ນນັ້ນ ຄືຄວາມຈິງທັງໝົດທີ່ຄົບຖວ້ນບໍ່ເປັນເຊັ່ນນັ້ນ-ຄວາມຈິງເຮົາມີຄວາມເລວຊາມຊົ່ວໃນໂຕທຸກຄົນຫລາຽຫຼືນອ້ຽຜູ່ຫລາຽກໍ່ຫລາຽ ແລະເຮົາກໍ່ມີຄວາມດີທຸກຄົນຫລາຽຫຼືນອ້ຽ ແຕ່ບໍ່ຫລາຽກໍ່ນອ້ຽ ຢ່າງໃດກໍ່ຕາມຖ້າມີນອ້ຽໆ ນີ້ມັນເປັນທຶນເດີມທັງນັ້ນບໍ່ໄຊ້ວ່າເຮົາບໍ່ມີ-ທຸກຄົນສາມາດທີ່ຈະປະຕິບັດງານຂອງທັມມະນີ້ໄດ້ທຸກໆ ຄົນ ບໍ່ເວັ້ນຈັກຄົນ-ແຕ່ຈະຕອ້ງຫາຫຼືຂຸດຄວາມດີທີ່ເຮົາມີເປັນທຶນເດີມນີ້ມາທຳໃຫ້ເກີດຄວາມດີເພີ້ມຂຶ້ນສະນັ້ນກໍ່ໄຊ້ສະມາທິທີ່ມີຢູ່ເດີມອາຈສະມາທິເສັຽກໍ່ໄດ້ ແຕ່ວ່າເປັນສະມາທິ-ສະມາທິມາກະຕຸ້ນທຳໃຫ້ເກີດສະມາທິດີຂຶ້ນສະນັ້ນສະມາທິດີຂຶ້ນນັ້ນກໍ່ມີໄດ້ທຸກຄົນ-ທຸກຄົນກໍ່ອາໃສຄວາມພຽນເພາະຄວາມອົດທົນທີ່ອາຈມີສະມາທິນີ້-ກໍ່ປຽບທຽບໄດ້ຄືໄຟສາຍນອ້ງໆ ຫຼືໄມ້ຂີດໄຟນັ້ນກໍ່ສາມາດທີ່ຈະໄຊ້ ອັນນີ້ສຳຫລັບໄປ ທຳໃຫ້ສະມາທິ
ໃຫຽ່ຂຶ້ນດີຂຶ້ນອັນນີ້ກໍ່ເປັນການປະຕິບັດທັມມະ ເພື່ອໃຫ້ໄດ້ສະມາທິ

## <u>ເຮົາທຳສະມາທິໃຫ້ນິ້ງແລະຈິດໃຈໃຫ້ນິ້ງກໍ່ຈະມາ</u>
## <u>ເຫັນໃຈຂອງເຮົາແລະຈະບໍ່ມີສິ່ງທີ່ລຶກລັບ</u>

ສະມາທິນີ້ຖ້າເຮົາເອົາມາໄຊ້ກໍ່ຄືສ້າງສະມາທິໃຫ້ດີຂຶ້ນນອ້ຽນຶ່ງແລ້ວເອົາມາໄຊ້ບໍ່ຕອ້ງທຳສະມາທິໃຫ້ໜັກແໜ້ນຫລາຽ ແຕ່ວ່າເປັນສະມາທິຄວບຄຸມໄດ້ເຮົາຈະມາເຫັນໃຈ ເຮົາຕອ້ງທຳສະມາທິໃຫ້ນິ້ງຈິດໃຈໃຫ້ນິ້ງກໍ່ຈະມາເຫັນໃຈຂອງເຮົາເອງ ໃຈຈະບໍ່ເປັນສິ່ງທີ່ລຶກລັບແລະໃຈຈະເປັນສິ່ງເປີດເຜີຍ ຄືເຮົາເປີດເຜີຍຕົວເຮົາເອງ-ຖ້າຢ້ານວ່າຄົນອື່ນຈະມາເຫັນໃຈເຮົາແລະຈະມາດອກລວງເຮົາ ເອົາມາໃນໃຈເຮົາບໍ່ຕອ້ງຢ້ານ ເຮົາດອກລວງເອົາໃນໃຈຂອງເຮົາເອງ ເບິ່ງໃຈນີ້ກໍ່ຈະເຫັນໄດ້ຕໍ່ເມື່ອໃຈນັ້ນໄດ້ຮັບທີ່ເອີ້ນວ່າ-<u>ອາຣົມ</u>-ຄືສິ່ງທີ່ເຮົາເຫັນໄດ້ດວ້ຽຕາໄດ້ຟັງດວ້ຽຫູເປັນຕົ້ນເວລາເຂົ້າມາແລ້ວເຮົາຈະເຫັນວ່າໃຈນີ້ ອັນນີ້ເວົ້າຢ່າງລັບໃຈນີ້ຈະມີຄວາມຮູ້ສຶກອັນໄດ ຄືຕົວໃຈນີ້ເປັນຮູບຮ່າງຢ່າງໄດ ໃຈນີ້ຈະມີໃຈຫຼືບໍ່ມັກໃຈອັນນີ້ໄຊ້ສະມາທິທີ່ທຳໃຫ້ໃຈນີ້ຢຸດກອ່ນ ແລ້ວກໍ່ເມື່ອມີອາຣົມຊື່ງອາຣົມເຂົ້າມາທຸກເມື່ອຕຣອດເວລາ ອາຣົມເຂົ້າມາເຮົາຕອ້ງກັ້ນອາຣົມນັ້ນໄວ້ ເທົ່າທີ່ມີຄວາມສາມາດດວ້ຽການຣະວັງ <u>ນິວອນ</u> ໃຈນັ້ນຈະພອ້ມຖ້າປຽບທຽບໄດ້ຈະເຫັນແລະຈະເຫັນໃນໃຈແຕ່ຣະຄົນນັ້ນຖ້າຄິດແທ້ໆ ເບິ່ງວ່າໃຈນີ້ເປັນນ້ຳນິ້ງ ສົມມຸດວ່າເຮົາເອົານ້ຳມາໃສ່ບໍ່ຕອ້ງໃສ່ຫລາຽຖ້າເອົານ້ຳໃສ່ຊາມອ່າງກໍ່ໄດ້ເອົາກັບບາ້ນໝວ່ຽນຶ່ງແລ້ວນ້ຳນັ້ນຈະຢຸດເອົາປົງໄວ້ໃຫ້ຢຸດຈັກນອ່ຽ ອັນນີ້ປຽບທຽບກັບໃຈໃຈຫຼືນ້ຳຢຸດນັ້ນແລ້ວເຮົາກໍ່ໄປຫາອັນໄດອັນນຶ່ງ ຈະເປັນກອ້ນກວດຫຼືຈະເປັນອັນໄດກໍ່ຕາມໃຫ້ໂຍນລົງໄປໃສ່ນ້ຳນັ້ນນ້ຳຊິເປັນຢ່າງໄດ ແຕ່ນ້ຳນັ້ນຈະເຟືອນຖ້າເຮົາເຫັນນ້ຳເຟືອນ ເຮົາຈະເຮັດຢ່າງໄດ ເຮົາກໍ່ເຫັນຖ້າເຮົາໂຍນຂອງເລັກໆນອ້ຽໆລົງໄປ ນ້ຳຕອ້ງເຟືອນເໝືອນເປັນຄື້ນນອ້ຽໆເຮັດແລ້ວຖ້າເຮົາສັ່ນ ມັນຈະເຟືອນໄປອີກບໍ່ຖ້າເຮົາເອົານ້ຳໃສ່ເຕັມອ່າງນັ້ນອາຈທຳໃຫ້ນ້ຳດົ້ນອອກມາຫຼືຖ້າໂຍນອັນໄດທີ່ມັນໃຫ່ຽ ຖ້າເຮົາໂຍນລົງໄປນ້ຳນັ້ນນ້ຳຕອ້ງຟົ້ງອອກມາແລ້ວທຳໃຫ້ໂຕະຫຼືອັນໄດທີ່ເຮົາປົງໄວ້ມັນຕອ້ງປຽກເປິດ ຖ້າເຮົາຢຸດນ້ຳກໍ່ອາຈຕອ້ງຢຸດອັນນີ້ແຫລະໃຈເຮົາ ຈະເຫັນໄດ້ວ່າໃຈຂອງເຮົາ ເມື່ອເຮົາໄດ້ຮັບການກະທົບຢ່າງໄດກໍ່ຕາມແລະດວ້ຽອາຣົມໄດກໍ່ຕາມໃຈນັ້ນຈະສະເທືອນຄືໃຈ ຈະເໝືອນນ້ຳໃຈນັ້ນຈະຄິດໃຈນັ້ນຈະທຳໃຫ້ມີຄວາມເຄື່ອນໄຫວ ເຮົາກໍ່ເຫັນໄດ້ຖ້າໃຈນັ້ນຖືກຢ່າງແຮງກໍ່ອາຈອຸກອາຈອອກມາທາງບໍ່ດີ ໝາຽຄວາມວ່າສົມມຸດວ່າເຮົາຢູ່ຊື່ ໆ ໃຜເຂົ້າມາຕີຫົວເຮົາຫຼືຕະເຮົາເຮົາກໍ່ຮາ້ຽແລ້ວໂຕ້ຕອບກັນໄປເລີຍອັນນີ້ແຫລະໃຈມັນອຸກອອກມາເຮົາກໍ່ເບິ່ງ ໃນການເບິ່ງໃຈນີ້ກໍ່ເປັນການເບິ່ງປະຕິກິຣິຍາຂອງໃຈ ຄາວນີ້ກໍ່ໄດ້ເຖິງແລ້ວໃຈທີ່ເຄື່ອນໄຫວຕ່າງໆທີ່ດີນັ້ນແລະໃຈນີ້ທຳໃຫ້ເຮົາມີຄວາມສຸກທຳໃຫ້ມີຄວາມທຸກ

ແມ່ນໃຈນີ້ເອງ ເມື່ອມີຄວາມສຸກບາງທີກໍ່ດີໂລດແລະດີໃຈຫລາຍອາດທຳໃຫ້ເສັຽກໍ່ໄດ້ ຖ້າກະໂດດ-ໂດດເຕັ້ນລົງມັນຕອ້ງຂາຫັກໄດ້ເປັນສິ່ງທັມມະດາ ຄືໝາຍຄວາມວ່າ ແມ່ນແຕ່ຄວາມສຸກກໍ່ທຳໃຫ້ມີຄວາມທຸກຕໍ່ໄປໄດ້

<u>ການສຶກສາພຸທສາສນາຄືການສຶກສາອາຣິຍະສັຈ</u>

ພຸທສາສນາສຶກສາອັນໃດ-ພຸທສາສນາກໍ່ສຶກສາຄວາມທຸກນີ້ເອງ ຄວາມທຸກເປັນສິ່ງທີ່ຄົນບໍ່ມັກຈຶ່ງຕອ້ງການພົ້ນທຸກ ພົ້ນທຸກສຳລັບຕົວເອງແຕ່ຣະຄົນໆ ແຕ່ວ່າການໃຫ້ພົ້ນທຸກນີ້ຍາກຫລາຍເພາະວ່າມີຄວາມຮູ້ສຶກວ່າບໍ່ເປັນທຸກ ມີຄວາມຮູ້ສຶກວ່າເປັນສຸກຢາກໄດ້ ຢາກມີຄວາມສຸກແລ້ວກໍ່ແມ່ນໃຜມາທຳໃຫ້ເຮົາເປັນທຸກຫຼືແມ່ນແຕ່ມີຄວາມສຸກ ແຕ່ຫາກນອ້ຍລົງໄປກໍ່ທຳໃຫ້ເຮົາຮາ້ຍທຳໃຫ້ເຮົາບໍ່ພໍໃຈ ແລ້ວກໍ່ເດືອດຮອ້ນຂຶ້ນມາ ແລ້ວກໍ່ບໍ່ມີຄວາມສຸກແລ້ວກໍ່ມີແຕ່ຄວາມທຸກ-ສະນັ້ນການສຶກສາພຣະພຸທສາສນາກໍ່ຄືການສຶກສາວ່າທຸກນີ້ມາຈາກໃສເປັນຫຍັງເຮົາບໍ່ມັກຄວາມທຸກ ເຮົາເປັນທຸກໃນທຸກເຮົາກໍ່ຈະຕອ້ງເບິ່ງທຸກນີ້ເປັນອັນໃດ ໃຫ້ເຂົ້າໃຈວ່າເປັນອັນໃດ ແລ້ວເຮົາກໍ່ຈະຕອ້ງເຫັນວ່າທຸກນີ້ມີເຫດຜົນແລະມີຕົ້ນເຫດເມື່ອມີຕົ້ນເຫດແລ້ວ ກໍ່ຕອ້ງເບິ່ງວ່າ ເຮົາຣະງັບທຸກໄດ້ບອ່ນໃດບອກວ່າມີທຸກຕອ້ງບັບເທົ່າທຸກຄວາມຈິງທຸກນັ້ນບັບເທົ່າບໍ່ໄດ້ ຕອ້ງປອ່ຽໃຫ້ໄປຕາມເຣື້ອງຂອງມັນແລ້ວກໍ່ເບີດແລ້ວມັນກໍ່ຫາຽໄປ ເພາະວ່າມີທຸກ ມັນກໍ່ບໍ່ມີແລະມັນກໍ່ເບີດໄປໄດ້ ຖ້າສຸກມີສຸກກໍ່ເບີດໄປໄດ້-ເຫດນີ້ການທີ່ພຣະພຸທສາສນາ ຫຼືພຣະພຸທເຈົ້າໃຫ້ເຮົາສຶກສາ ກໍ່ຄື ສຶກສາໃຫ້ເຫັນວ່າທຸກນັ້ນມັນມາຈາກໃສ-ໃຫ້ຮູ້ວ່າທຸກນັ້ນມັນເປັນຢາ່ງໃດແລ້ວທຸກນັ້ນມາຈາກໃສ-ຈະເຫັນວ່າທຸກກໍ່ຕອ້ງມີການບໍ່ທຸກກໍ່ໄດ້ ເມື່ອມີການບໍ່ທຸກກໍ່ມີການເບີດທຸກໄດ້ມີການເບີດທຸກໄດ້ແລ້ວ-ກໍ່ເຫັນໄດ້ວ່າມີທາງຈະເບີດທຸກ ອັນນີ້ທາ່ນກໍ່ເອີ້ນວ່າ-ອະຣິຍະສັຈ ສະນັ້ນການສຶກສາພຸທະສາສນາ ກໍ່ຄື ການສຶກສາອະຣິຍະສັຈນັ້ນເອງ ແຕ່ກອ່ນທີ່ຈະສຶກສາອະຣິຍະສັຈ ຫຼືໄດ້ຊາບອະຣິຍະສັຈກໍ່ຍອ່ມຕອ້ງເບິ່ງກົນໄກຂອງການສຶກສາ ພຣະພຸທສາສນາເຂົ້າໃຈວ່າຈະຕອ້ງເລີ້ມຈາກທີ່ໄດ້ກາ່ວມາຂາ້ງເທິງນີ້ ຄືຈຸດເລີ້ມຕົ້ນໃຫ້ເບິ່ງໃຈດວ້ຽເຄື່ອງມືທີ່ມີ ຄື-ສະມາທິ-ແລ້ວກໍ່ໃນການນີ້ໃນຕອນຕົ້ນນັ້ນກໍ່ຕອ້ງມີຄວາມພໍໃຈ ໃນການທີ່ຈະປະຕິບັດ ຄື ຂອມໃຈມັກໃຈມີສັນທະແລ້ວກໍ່ຄວາມພຽນໃນການທຳ ໃຫ້ມີຄວາມຈົດຈໍ່ໃນການທຳໃຫ້ມີຄວາມສຳດວຈໃນການທຳ ຄືໄດ້ສຶກສາອະຣິຍະສັຈແລະເຂົ້າໃຈໃນອະຣິຍະສັຈ-

<u>ການສຶກສາພຣະພຸທສາສນາ ຕອ້ງທຳດວ້ຽຄວາມສຸຈຣິຕ</u>

ການສຶກສາພຣະພຸທສາສນານີ້ເປັນສິ່ງທີ່ບໍ່ຍາກ ຖ້າຈິດໃຈຈົດຈໍ່ ຖ້າມີຄວາມຕັ້ງໃຈຈິງແລະມີຄວາມ ຊື່ງເອີ້ນກັນທຸກຄົນວ່າ-ຄວາມສຸຈຣິຕ

ຖ້າທຸຈຣິຕແລ້ວ ບໍ່ມີທາງເພາະໄປໃນທາງທີ່ຜິດທຸກຄັ້ງ-ໄປໃນທາງທີ່ຄິດວ່າດີຄິດວ່າສະດວກແຕ່ວ່າຄະມະນະໄປໃນທາງທີ່ຜິດທັງນັ້ນ ສະນັ້ນຕອ້ງມີຄວາມສຸຈຣິຕເວລາໃຫ້ໂອວາດກັບໃຜ ຫຼື ທ່ານຜູ້ໃຫຍ່ໃຫ້ໂອວາດກັບຜູ້ອື່ນ ກໍ່ຕອ້ງເວົ້າວ່າຂໍໃຫ້ທຳງານດວ້ຍຄວາມຊື່ສັດສຸຈຣິຕ ວາງຕົວດວ້ຍຄວາມຊື່ສັດສຸຈຣິຕບໍ່ທຸຈຣິຕ ອັນນີ້ກໍ່ເພື່ອໃຫ້ງານຂອງສວ່ນຣາຊການ ຫຼືສວ່ນງານນັ້ນດຳເນີນໄປດວ້ຍດີ ເພາະວ່າຖ້າທຸຈຣິຕແລ້ວກໍ່ພັງ ແຕ່ວ່າການງານຂອງພຣະພຸທສາສນາເປັນການງານຂອງແຕ່ຣະຄົນເປັນສວ່ນຕົວແທ້ໆ ກໍ່ຕອ້ງທຳດວ້ຍຄວາມສຸຈຣິຕເໝືອນກັນ ຖ້າບໍ່ທຳດວ້ຍຄວາມສຸຈຣິຕແລ້ວຕົນເອງກໍ່ເທົ່າກັບເອົາກອ້ນຫີນມາແຂນທີ່ຄໍ ແລ້ວຍົນລົງໄປນາຣົກ-ອັນທີ່ເວົ້າມານີ້ກໍ່ເພາະວ່າ ພຸທສາສນານີ້ເປັນສິ່ງທີ່ທຸກຄົນຕອ້ງສົນໃຈເປັນສິ່ງທີ່ທຸກຄົນຈະໄດ້ປະໂຍດຖ້າເຂົ້າໃນທາງທີ່ຖືກ ແລະເປັນສິ່ງທີ່ບໍ່ຍາກທີ່ຈະປະຕິບັດ<u>-ໃນຄຳວ່າບໍ່ຍາກໃນການປະຕິບັດ</u>-ບໍ່ໝ້າທີ່ຈະເວົ້າເທິງຖ້າເປັນສິ່ງທີ່ງ່າຍໆ ແຕ່ວ່າຈະງ່າຍຖ້າຕັ້ງຈິດໃຫ້ຖືກທີ່ຖືກທາງດວ້ຍຄວາມພຽນແລະດວ້ຍຄວາມຈົດຈໍ່ ດວ້ຍຄວາມຮູ້ຮອບຄອບຄືການສຳຣວດໃຫ້ດີກໍ່ຈະເປັນສິ່ງບໍ່ຍາກ ຖ້າໄດ້ເວົ້າໃຫ້ຍາວກໍ່ເພາະວ່າສິ່ງທີ່ງ່າຍນີ້ທຸກຄົນອາຈຍັງບໍ່ເຫັນຫຼືເຫັນຍາກ ເຫັນຍາກໃນສິ່ງທີ່ງ່າຍຈຶ່ງ ຕອ້ງເວົ້າຍາວ ແຕ່ຖ້າທຸກຄົນເຫັນສິ່ງງ່າຍແລ້ວກໍ່ບໍ່ຕອ້ງເວົ້າຍາວ ຖ້າສົມມຸດວ່າທຸກຄົນເຫັນວ່າງ່າຍແທ້ໆໝາຍຄວາມວ່າເຫັນສວ່ນທີ່ງ່າຍຈະເວົ້າໄດ້ສັ້ນໆ ຄືທ່ານທັງຫລາຍໃຫ້ມີຄວາມພຽນໃນການປະຕິບັດຈິຕທີ່ຖືກຕອ້ງທີ່ດີ ອັນນີ້ກໍ່ເບີດຄວາມເວົ້າແລະບໍ່ຕອ້ງເວົ້າຢ່າງອື່ນ ຫຼື ເຜີ່ນຈະບອກວ່າຖ້າເວົ້າຢ່າງນີ້ກໍ່ຍັງຍາວຖ້າທ່ານທັງຫລາຍ ມາຟັງແລ້ວກໍ່ຮູ້ວ່າ ທຸກຄົນຮູ້ວ່າງ່າຍແລ້ວຮູ້ແທ້ໆບໍ່ໄຊ້ຮູ້ເກົ້ໆເສີຍ ໆຮູ້ແທ້ໆ ວ່າງ່າຍສິ່ງງ່າຍບອກວ່າສະບາຍດີເທົ່ານັ້ນເອງກໍ່ພໍ ບໍ່ຕອ້ງມານັ່ງຟັງມາຢືນຟັງໃຫ້ມັນເມື່ອຍແລະບໍ່ຕອ້ງມາເວົ້າໃຫ້ຄໍແຫ້ງສື່ໆກໍ່ເວົ້າພຽງສະບາຍດີ ກໍ່ພຽງວ່າປະຕິບັດດີປະຕິບັດຊອບກໍ່ພໍ ແຕ່ມັນຍາກທີ່ວ່າບໍ່ເຫັນມັນງ່າຍ ສະນັ້ນໃນທີ່ນີ້ຖ້າເວົ້າເກີນໄປແລະເວົ້າຫລາຍ ກໍ່ຈະເປັນອັນຕຣາຍຄືກັນເພາະວ່າອາຈມີຄົນລັດຄ້ານກໍ່ໄດ້ ໃນຄຳເວົ້າທີ່ເວົ້າອອກໄປຊຶ່ງອາຈເບິ່ງເໝືອນວ່າເປັນທັສຖິ ຄວາມຈິງບໍ່ໄຊ້ທັສຖິເຜຍກເຜວອັນໃດເປັນສວ່ນນຶ່ງ ຂອງການສັ່ງສອນຂອງພຣະພຸທເຈົ້າແທ້ໆ ບໍ່ໄຊ້ສິ່ງທີ່ຄິດຄົ້ນຂຶ້ນມາໂດຍບໍ່ມີຫລັກຖານ

<u>ຂໍໃຫ້ໄດ້ໄປປະຕິບັດແຕ່ຣະຄົນໃນຈິດໃຈຂອງແຕ່ຣະຄົນຕອ້ງດີ</u>

ຖ້າທ່ານມາທີ່ນີ້ແລ້ວທ່ານກໍ່ຕອ້ງນັ່ງຢູ່ເທິງໆ ແຕ່ຂໍຂອບໃຈທີ່ທ່ານມາດວ້ຍຄວາມປາຖນາດີແລະດີໃຈຫລາຍຖ້າທຸກຄົນທີ່ຢູ່ໃນກຸ່ມສະມາຄົມຫຼືຊົມລົມຫຼືຊຸມນຸມທີ່ຈະສຶກສາພຸທສາສນາຈະໄປຄິດທົບທວນໜ້າທີ່ຂອງກຸ່ມຕ່າງໆ ດັ່ງກ່ວມານີ້ ແລະໜ້າທີ່ຂອງແຕ່ລະຄົນ

ທີ່ວ່າບໍ່ໄຊ້ວ່າຈະບອກວ່າຈະເຜີຍແຜ່ພຣະພຸທສາສນາ-ໃຫ້ຟັງຄຳສອນພຣະພຸທສາສນາ ແລະສົ່ງເສີມພຣະພຸທສາສນາ ຂໍໃຫ້ໄດ້ໄປປະຕິບັດແຕ່ລະຄົນ-ໃນຈິດໃຈຂອງແຕ່ລະຄົນ ແລະໃນທຸກຄົນຈະເປັນສາສນາໃດກໍ່ຕາມໃນປະເທດເຮົາ ກໍ່ຈະໄດ້ຮັບປະໂຍດຂອງຕົນ ສະນັ້ນຖ້າທຸກຄົນໄດ້ປະຕິບັດປະໂຍດຂອງຕົນຢ່າງແທ້ຈິງ ບໍ່ໄຊ້ບຽງບາຍໄປໃນທາງ ທຸຈຣິຕໃຫ້ທຳຈິງໆແທ້ໆ ໃນປະໂຍດຂອງຕົນຂອງທັມຂອງຕົນຫຼືຂອງໂລກຂອງຕົນ ເປັນອັນວ່າໄດ້ປະໂຍດແລ້ວສຳຫລັບທຸກຄົນໃນໂລກ ເປັນປະໂຍດແກ່ຜູ່ອື່ນທັງເບີດ ເພາະວ່າເຮົາແຜ່ຄວາມດີແຜ່ຣັສໝີເຊັ່ນດຽວກັບເຮົາວ່າ ພຣະພຸທເຈົ້າຊົງຕັສຮູ້ ທ່ານຕັສຮູ້ແລ້ວກໍ່ແຜ່ຣັສໝີອອກມາ ເຮົາໄດ້ຮັບທັງນັ້ນ ເຜ່ນຈະເປັນຄົນທີ່ບໍ່ໄຊ້ພຸທສາສນາ ກໍ່ໄດ້ຮັບປະໂຍດຂອງການຕັສຮູ້ຂອງພຣະພຸທເຈົ້າ

<u>ທັມມະໂອວາທ</u>

ຈິດເປັນສິ່ງສຳຄັນ ສັມມາທິຖິ ຄື ຄວາມເຫັນຊອບຄືຕົວປັນຍາ ມັນເກີດຂຶ້ນ ພໍປັນຍາເກີດຂຶ້ນເທົ່ານັ້ນແລະສັມມາທິຖິຕົວດຽວເກນຂຶ້ນມາ ນັ້ນເປັນອາການຂອງມັນ ປັນຍາສັມມາທິຖິ ເກີດຂຶ້ນມາມັນເປັນມັກຄະ-8-ສົມບູນເລີຍເບື້ອງຕົ້ນເຮົາຍັງຟຸ້ງຊ່ານຢູ່ກໍ່ຕອ້ງມາແກ້ ເຮົາຈະເຂົ້າໃຈສງົບຣະງັບດວ້ຽອຸບາຍນີ້ ຄວາມຟຸ້ງຂນະປະຕິບັດເພາະເຮົາໄປຍຶດໝັ້ນ ເຮົາຍັງຍຶດເທົ່າໃດມັນກໍ່ຍິ່ງຟຸ້ງຊ່ານ ດັ່ງນັ້ນທ່ານເອີ້ນວ່າ ສະມຸທັຍ ຍຸ້ງໄປເບີດທຸກສິ່ງທຸກຢ່າງ ພໍບັນຫາສັມມາທິຖິເກີດຂຶ້ນ ສະມຸທັຍກໍ່ຫາຽ ນິໂຣທກໍ່ເກີດຂຶ້ນ ການທີ່ເຮົາມາເຫັນວ່າ ນີ້ເປັນສັມມາທິຖິຄື ຕົວມັກຄະທັງ-8-ມາຣວ່ມກັນຢູ່ ນະທີ່ດຽວກັນນີ້ເມື່ອຈິດລວມກັນໃນສະມາທິແນ່ວແນ່ເຕັມທີແລ້ວ ສັມມາທິຖິຄວາມເຫັນຊອບກໍ່ເກີດຂຶ້ນ ນະ ສັມມາທິຖິນັ້ນເອງ ຄື ເຫັນທຸກເຫັນ ສະມຸທັຍ ສວ່ນຈະລະໄດ້ຫລາຽນອັຍຂນາດໃດກໍ່ແລ້ວແຕ່ກຳລັງຂອງປັນຍາ ສັມມາທິຖິ ຂອງຕົນ ເມື່ອລະໄດ້ແລ້ວນິໂຣທ ຄວາມດັບເຢັນສນິທຂນາດໃດກໍ່ຈະປະກົດຂຶ້ນສະເພາະຕົນໃນທີ່ນັ້ນ ທັມມະເປັນທາງແກ້ທຸກເມື່ອຈະແກ້ກໍ່ຕອ້ງສອບທຸກກອ່ນ ໃຫ້ເຫັນທຸກກອ່ນ ເໝືອນກັບເຮົາທຳງານອັນໃດ ເຮົາຕອ້ງເຫັນງານກອ່ນຈື່ງຈະທຳໄດ້ ທຸກອັນນີ່ງທີ່ເປັນງານຂອງພວກເຮົາຄວນທຳ ຖ້າບໍ່ທຳເຮົາບໍ່ພົ້ນ ສະນັ້ນພຣະພຸທເຈົ້າຊົງສອນພວກເຮົາໃຫ້ຮູ້ທຸກ ເຮົາໄດ້ຊື່ວ່າຜູ້ນັບຖືພຣະພຸທສາສນາປະຈຳໃຈ ຕອ້ງໃຫ້ເຂົ້າໃຈຫລັກທັມຈິງໆແທ້ໆຈື່ງຈະຖືກຕອ້ງ ການເປີດຈິດໃຈໃຫ້ກວ້າງສວ່າງສວັຍນັ້ນ ເປັນນິໃສຂອງຊາວພຸທໂດຍຕົງເຮົາເຊື່ອຄຳສອນຂອງພຣະພຸທເຈົ້າ ທານສີນພາວະນາ ຫຼືການທຳດີໄດ້ດີການທຳຊົ່ວໄດ້ຊົ່ວແທ້ໆ ກໍ່ຄວນທີ່ຈະຮີບຂົນຂວາຍຫາທາງສ້າງຄວາມດີເສັຽ ຈະໄດ້ມີກຳລັງໃຈຂອງຈິດໃຈຕົນຕໍ່ໄປ

ຄົນເຮົາໃນໂລກນີ້ເກີດມາແລ້ວຍອ່ມມີຄວາມດີແລະຄວາມຊົ່ວປະປົນກັນໄປ ອັນໄດເຮົາ ຈະພົບກັບຄວາມດີພຽງຢ່າງດຽວ ອັນໄດໆ ກໍ່ບໍ່ສູ້ການສ້າງຄວາມດີ ຄວາມດີນັ້ນຜູ້ໄດ ສ້າງຜູ້ນັ້ນຍອ່ມມີຄວາມສຸກເຢັນອົກເຢັນໃຈ ການໃຫ້ອະໄພນີ້ກໍ່ເປັນສິ່ງສຳຄັນ ປັດຈຸບັນ ໂລກເຮົາຕອ້ງການຄົນດີໂລກຕອ້ງການໃຫ້ອະໄພ ເພາະສະນັ້ນເປັນທາງແຫ່ງຄວາມສັນ ຕິສຸຂ ຕອ້ງໃຫ້ອະໄພແລະທຳໃຫ້ໃຈກວ້າງຂວາງ ຈຶ່ງຈະໄດ້ຊື່ວ່າເຊື່ອຟັງຄຳສອນຂອງພຣະ ສັມມາສັມພຸທເຈົ້າແທ້ຈິງ ທັມຂອງອົງສົມເດັຈພຣະສັມມາສັມພຸທເຈົ້ານີ້ ເປັນຂອງເຢັນ ເປັນຂອງບໍຣິສຸດບຸກຄົນຜູ້ມີປັນຍາ ຈະບໍ່ປະຕິເສດທັມມະຂອງພຣະພຸທເຈົ້າເພາະທັມມະ ຖ້າຢູ່ໃນຈິດໃຈຂອງຜູ້ໄດ ຜູ້ນັ້ນຍອ່ມມີຄວາມສຸກຄວາມຈະເຣີນ ທັມມະຊາດຂອງທັມມະ ນັ້ນຜູ້ປະຕິບັດບຳເພັນເທົ່ານັ້ນຈຶ່ງຈະຮູ້ໄດ້ ຄຣູບາອາຈານຫລາຍອົງທ່ານບໍ່ເຄີຍລົດລະໃນ ການປະຕິບັດທັມ ເພາະການປະຕິບັດທັມ ທີ່ເຮົາກະທຳຢູ່ເຣື້ອຍໆ ເປັນນິດໂດຍບໍ່ຢຸດຢັ້ງ ຜົນຍອ່ມເກີດຂຶ້ນໄດ້ທຸກຄັ້ງໄປ ແລະຈະສືບເນື່ອງກັນໄປບໍ່ຂາດລະຍະ ຕາມທີ່ເຮົາບໍ່ຖິ້ມ ການປະຕິບັດທັມນັ້ນ ເຮົາເປັນຄຣາວາດຕອ້ງພະຍາຍາມທຳຄຸນງາມຄວາມດີ ໃຫ້ທຳ ທານຮັກສາສີນບຳເພັນພາວະນາໃຫ້ຈະເຣີນແລ້ວປັນຍາກໍ່ຕອ້ງເກີດຕາມມາເອງ ທ່ານ ຜູ້ຮູ້ເວົ້າເປັນບັນຫາວ່າກວາ້ຍ4-ຫວີສຳຫລັບອາຫານ 4 ສຳຫລັບສາມະເນນນັ່ງເຝົ້າ ພຣະເຈົ້ານັ່ງສັນ ບັນຫານີ້ເປັນບັນຫາທັມມະ ປຽບທຽບກັບການປະຕິຂອງບຸກຄົນ ສວ່ນ ຫລາຍຄົນຈະບໍ່ນຳເອົາໄປຄິດກັນ ຂໍ້ທັມມະທີ່ທ່ານໃຫ້ໄວ້ແລ້ວໃຫ້ນຳໄປຕີຄວາມໝາຍ ໃຫ້ລະອຽດ ໃນກວາ້ຍ 4 ຫວີນັ້ນໄດ້ແກ່ທາດ 4 ເນັນນອ້ຍນັ່ງເຝົ້ານັ້ນ ໄດ້ແກ່ຄົງໂງ່ ເວລາເບົາປັນຍາບໍ່ຮູ້ເທົ່າທັນຕາມຫລັກຂອງພຣະທາດ 4 ພຣະທາດ 4 ຄືດິນ ນໍ້າ ໄຟ ລົມ ນັ່ງເຝົ້າຕົວເອງຢູ່ບໍ່ຮູ້ໃນຕົວຂອງຕົນນັ້ນມີອັນໄດແທ້ ກິນແລ້ວກໍ່ນອນລຽ້ງຮາ່ງ ກາຍໃຫ້ອວ້ນທວ້ນສົມບູນບໍ່ໄດ້ທຳອັນໄດທີ່ດີ ໃຫ້ເກີດຂຶ້ນແກ່ຕົວເອງເລີຍ ອັນນີ້ລະຊື່ ວ່າໂງ່ເຂລາເບົາປັນຍາ ໄດ້ແຕ່ນັ່ງເຝົ້າຕົນເອງຢູ່ສາໃສເນນນັ່ງເຝົ້າສຳຫລັບທີ່ມີຢູ່ແລ້ວ ໂດຍບໍ່ສັນ ກໍ່ໝາຍເຖີງບຸກຄົນທີ່ບໍ່ຮູ້ທາດ 4 ຕາມຄວາມເປັນຈິງວາ່ ທາດດິນ ທາດນໍ້າ ທາດໄຟ ທາດລົມເປັນຢ່າງໄດ ບໍ່ຍອມກຳໜົດຮູ້ແບບສນິດທີ່ໃຫ້ເກີດປັນຍາ ພຣະເຈົ້ານັ່ງ ສັນ ໝາຍຄວາມວ່າພຣະອະຣິຍະເຈົ້າທັງຫລາຍທີ່ຮູ້ຫລັກຄວາມຈິງອັນປະເສີດ ເມື່ອພາ ວະນາໄດ້ທີ່ແລ້ວກໍ່ຍົກທາດ 4 ທາດ 4 (ປຽບດວ້ຽກວາ້ຍ) 4 ຫວີ ມາພິຈາຣະນາຕາມ ຫລັກແຫ່ງຄວາມເປັນຈິງ ຈິ່ນທ່ານເລົ່ານັ້ນສຳເຣັດຄຸນເບື້ອງສູງ ຄື ພຣະອໍຣະຫັນກໍ່ ເພາະພຣະອໍຣະຫັນເຈົ້າ ທ່ານເປັນຜູ້ສລາດໃນອໍຣະຫັນແລະພະຍັນສະນະຈຶ່ງບໍ່ນັ່ງເຝົ້າ ເສີຍໆ ທາດ 4 ກໍ່ຢູ່ທີ່ຕົວຂອງເຮົາ ຂັນ 5 ກໍ່ຢູ່ທີ່ຕົວຂອງເຮົາ ມັນບໍ່ໄດ້ຢູ່ທີ່ໄດເລີຍ

ແຕ່ຄົນເຮົາບໍ່ຮູ້ວ່າອັນໃດເປັນອັນໃດ ກໍ່ເລີຍຕອ້ງນັ່ງເຝົ້າເສີຍໆ ເໝືອນລີງນັ່ງເຝົ້າເມັດທອງຄໍາ ທີ່ບໍ່ຮູ້ຄ່າຂອງທອງຄໍາ ຄົນທີ່ໂງ່ເວລາເບົາປັນຍາກໍ່ໄດ້ແຕ່ນັ່ງເຝົ້າຮູບທັມນາມທັມ ທີ່ມັນຢູ່ໃນຕົວຂອງເຮົານີ້ລະ ທ່ານຫຍິບຍົກເອົາທາດ 4 ຂັນ 5 ມາສັບເຄາະໃຫ້ຣະອຽດຈົ່ນທ່ານຮູ້ແຈ້ງເຫັນຈີງ ໃຫ້ອັຕພາບຮ່າງກາຍຂອງທ່ານເອງແລະອັຕພາບຮ່າງກາຍຂອງຄົນອື່ນ ທ່ານນັ່ງສັນຄືນັ່ງພິຈາຣະນາອັຕພາບ ຄືທາດ 4 ຂັນ 5 ເກີດມາແລ້ວມັນເປັນຢ່າງໃດ ເກີດມາແລ້ວມັນເປັນທຸກຄືຄວາມປຣ່ວນແປງ ຂອງຮ່າງກາຍ ພວກທ່ານທັງຫລາຽຢ່າໄດ້ນັ່ງເຝົ້າຮ່າງກາຍຢູ່ເສີຍໆ ມັນບໍ່ເກີດປັນຍາ ສວ່ນປັນຍາມັນເກີດຈາກການພາວະນາ ຄືການອົບຮົມສັມມະນາຈິດໃຈ ເພື່ອຈະທໍາລາຍກິເລສໃຫ້ຫລຸດຫາຽໄປໃນທີ່ສຸດຫລັກສໍາຄັນກໍ່ຄົງຈະມີກາຍ ນີ້ລະສໍາຄັນຫລາຽກາຍກໍ່ຄືຂັນ 5 ຮູບເວທນາສັນຍາສັງຂານວິນຍານ ຕາມທັມມະດາຂອງຮູບ ເວທນາສັນຍາສັງຂານວິນຍານ ນີ້ຢູ່ກັບຕົວເຮົາ ຄື ຈິດຕົກລົງວ່າຂັນ 5 ກັບຈິດນີ້ຢູ່ຮ່ວມກັນແຍກກັນບໍ່ອອກ ແຕ່ຖ້າຄົນບໍ່ຮູ້ບໍ່ເຂົ້າໃຈກໍ່ແຍກແຍະອອກເປັນສວ່ນວ່າ ສວ່ນໃດເປັນຮູບສວ່ນໃດເປັນເວທນາແລະສວ່ນໃດສັນຍາ ສັງຂານວິນຍານຍຸ່ງເຫຍີງກັນໄປເບີດນອກຈາກປ່ອຍໃຫ້ເຮື້ອງລາວທີ່ເກີດຂື້ນກຣ່ວພັນກັນກັບໃຈ ໃຫ້ມັນຜ່ານໄປຕາມທັມມະຊາດຂອງມັນ ເຮົາຕອ້ງພິຈາຣະນາໃຫ້ຮູ້ເຫັນຕາມຄວາມເປັນຈີງໃນຂັນທັງ 5 ສູ້ກິເລດທີ່ມັນຍໍ່າຍີຕົວເຮົາຢູ່ນັ້ນ ກໍ່ເທົ່າກັບວ່າພວກເຮົາໄດ້ທໍາອັນໃດໃຫ້ເປັນປະໂຍດແກ່ຕົນເອງ ເຖີງແມ່ນພວກເຮົາຈະບວດເຂົ້າມາຢູ່ໃກ້ພຣະພຸທອົງ ກໍ່ຈະບໍ່ມີຄວາມໝາຽ ນັກບວດທີ່ແທ້ຈີງນັ້ນຕອ້ງເປັນຜູ້ຕໍ່ສູ້ຫຼືປາບປາມກັບກິເລດ ຖ້າເຮົາບໍ່ມີການຕໍ່ສູ້ກັນ ປ່ອຍໃຫ້ມັນຍໍ່າຍີເຮົາແຕ່ຝ່າຍດຽວນັ້ນຕົວເຮົາເອງຈະຍໍ່າແຢ້ລົງໄປທຸກທີ ຜົນສຸດທ້າຽເຮົາກໍ່ເປັນຜູ້ແພ້ ຍອມເປັນທາດຮັບໃຊ້ຂອງກິເລດໄຊ້ການບໍ່ໄດ້ ສໍາຫລັບການສູ້ຮົບຕົບຕີກັບກິເລດ ຈິດໃຈຂອງເຮົາຈະຮູ້ສຶກວ່າມີຄວາມທຸກຍາກລໍາບາກເປັນກໍາລັງຢ່າງຫລາຽທີ່ສຸດ ແຕ່ກໍ່ຂໍໃຫ້ພວກເຮົາທໍາຕໍ່ແລະຍອມຮັບຄວາມທຸກຍາກລໍາບາກລໍາບົນອັນນັ້ນຍິ່ງຮັບກັບຄວາມລໍາບາກເພາະຄວາມພຽນພະຍາຍາມຂອງເຮົາ ເມື່ອເຮົາມີຄວາມທໍ້ຖອຍອິດເມື່ອຍໝ້າຣະອາຍໃຈຕໍ່ຄວາມພຽນຂອງຕົນນັ້ນໃຫ້ເພິ່ງຣະນຶກເຖີງພຣະພຸທອົງຜູ້ເປັນບໍລົມຄຣູຂອງພວກເຮົາວ່າ **ພຸທໂທ ທັມໂມ ສັງໂຄຈາຕີ ນານາໂທນຕູ້ ພຣະຄະວະໂຕ** ຄືໃຫ້ຍຶດພຣະພຸທ ພຣະທັມ ພຣະສົງເປັນອາຣົມໂດຍສະເພາະ ພຣະພຸທເຈົ້າຂອງພວກເຮົາ ກອ່ນທີ່ພຣະອົງຈະທໍາລາຍຂອງກິເລດໄດ້ຢ່າງລາບຄາບ ພຣະອົງກໍ່ໄຊ້ອາວຸດຫລາຽຢ່າງຫລາຽສນິດເຂົ້າປະຫັດປະຫານຈົ່ນກິເລດຍອມຈໍານົນຕໍ່ຫລັກຖານຍອມໃຫ້ພຣະອົງເຄາະສັບໄດ້ຢ່າງສະບາຍ **ຂັນຕີ** ພຣະ

ອົງກໍ່ນໍາມາໄຊ້ ເຊັ່ນພຣະອົງບໍາເພັນທຸກກິຣິຍາ ຄືການກະທໍາທີ່ບຸກຄົນທັງຫລາຍໃນໂລກ ທໍາໄດ້ຢ່າງຍິ່ງ ເພາະຕອ້ງໄຊ້ຄວາມອົດທົນຢ່າງໃຫ່ຽຫລວງ ຈິ່ນເອົາສະນະກິເລດທັງ ຫລາຽທັງປວງໄດ້ ພວກທ່ານທັງຫລາຽເມື່ອເຂົ້າມາຢູ່ປ່າແລ້ວ ກໍ່ໄດ້ຊື່ວ່າທໍາຕາມຄໍາ ສອນຂອງພຣະພຸທເຈົ້າ ພຣະພຸທເຈົ້າບໍ່ນິຍົມຢູ່ບຈ້ານຄຸກຄິດວັຽໝູ່ ເພາະການຄຸກຄິດວັຽ ໝູ່ ຈິດໃຈຂອງເຮົາກໍ່ຈະໃຫລໄປສູ່ອາລົມຕ່າງໆ ໄດ້ງ່າຍ ໂອກາດທີ່ຈະທໍາໃຫ້ຈິດເປັນສະ ມາທິຫຼືທໍາໃຫ້ຈິດມີຄວາມອາຣົມເປັນນິ່ງນັ້ນຍາກເຫລືອເກີນ ພຣະພຸທອົງ ເມື່ອພຣະອົງ ຊົງບໍາເພັນທຸກກິຣິຍາພວກທ່ານປັນຈະວັກຄີ 5 ຮູບໄປເຝົ້າປະຕິບັດພຣະອົງຢ່າງໄກ້ຊິດ ດວ້ຽຕັ້ງໃຈວ່າ ເມື່ອພຣະອົງບັນລຸທັມແລ້ວຈັກບອກແກ່ເຮົາກອ່ນ ເມື່ອເຮົາມາສັນນິຖານ ເບິ່ງແລ້ວຈະເຫັນໄດ້ວ່າບຸກຄະລິ ຫຼືການຢູ່ຮວ່ມກັນຫລາຽຄົນນັ້ນເປັນປະຕິປັກຕໍ່ການທໍາ ສະມາທິ ພຣະອົງກໍ່ເລີຍຕອ້ງທໍາວິທີໄດວິທີນຶ່ງ ໃຫ້ພວກປັນຈະວັກຄີເກີດຄວາມເບື່ອໜ່າຽ ແລ້ວຈະໄດ້ຫລີກໜີໄປຢູ່ບອ່ນອື່ນ ພຣະອົງຕອ້ງກັບມາສເວີຍພຣະກະຍາຫານອີກ ທໍາໃຫ້ ທ່ານເລົ່ານັ້ນບໍ່ເຊື່ອໝັ້ນໃນການກະທໍາຄວາມພຽນເລີຍຕອ້ງຫລີກໜີໄປຢູ່ປ່າ ອິສິປະຕະນະ ຄົດທາຍວັນໜີຈາກທ່ານໄປແລ ພຣະອົງກໍ່ໄດ້ທໍາຄວາມພຽນທາງໃຈໃຫ້ອຸດົມຍິ່ງຂຶ້ນ ຈິ່ນ ສໍາເຣັຈເປັນພຣະສັມມາສັມພຸທເຈົ້າໂດຍການບໍ່ນານ ອັນນີ້ຈະເຫັນໄດ້ວ່າພຣະອົງທໍາເປັນ ຕົວຢ່າງໄວ້ໃຫ້ເຮົາເບິ່ງແລ້ວ ເຮົາຜູ້ເປັນສິດຂອງພຣະອົງທ່ານກໍ່ຄວນຈະສໍານຶກແລະດໍາ ເນີນຕາມການທໍາຄວາມພຽນ ເພື່ອທໍາລາຍກິເລດ ມັນຈະຕອ້ງລໍາບາກທຸກສິ່ງທຸກຢ່າງ ການກິນກໍ່ລໍາບາກອົດມື້ສັນມື້ກໍ່ຕອ້ງຍອມອົດ ອົດມັນເຮດຫຍັງ ອົດເພື່ອປາບກິເລດ ກິ ເລດມັນກໍ່ຕົວມານານແສນນານຫລາຽກັບຫລາຽກັນມາແລ້ວ ຈາກເຮົາສາວະຫາໂຕຕົ້ນ ຕໍໂຄດເຫງົ້າຂອງມັນບໍ່ພົບ ນີ້ເພາະທ່ານຈຶ່ງສອນໃຫ້ຢູ່ປ່າຫາທີ່ສງັດແມ່ນແຕ່ໃນຄັ້ງພຸທ ການ ທ່ານພຣະເຖຣະຫລາຽທ່ານທີ່ມຸ້ງໜ້າຕໍ່ແດນພົ້ນທຸກ ໄດ້ອອກປະຕິບັດຕົນທໍຣະມານ ຕົນຢູ່ໃນປ່າໃນເຂົາແລະກໍ່ໄດ້ບັນລຸມັກເປັນພຣະອະຣິຍະບຸກຄົນເປັນຈໍານວນຫລາຽນັບບໍ່ ຖວ້ນ ທ່ານທໍາກັນຈິງຈັງຫວັງຜົນ ຄື ການຫລຸດພົ້ນແທ້ໆ ທ່ານສະຣະເປັນສະຣະຕາຍມາ ແລ້ວທັງນັ້ນ ຄວາມທຸກຍາກລໍາບາກທຸກຫລາຽທຸກນອ້ຍ ຍອ່ມມີແກ່ທຸກຄົນໃນຂນະປະຕິ ບັດ ເຮົາຕອ້ງທໍາຄວາມພຽນ ກໍ່ໄປທຸກຢູ່ກັບຄວາມພຽນ ເຮັດນາເຮັດໄຮ່ກໍ່ໄປທຸກຢູ່ກັບ ເຮັດນາເຮັດໄຮ່ ອັນນີ້ເປັນຂອງທັມມະດາແຕ່ຈະທຸກຫລາຽທຸກນອ້ຍ ກໍ່ຂຶ້ນຢູ່ກັບການກະ ທໍາທີ່ສລາດຮູ້ວິທີການພໍສົມຄວນ ຢ່າງການທໍາຄວາມພຽນຕອ້ງເປັນຜູ້ຮັກສາສັດຈະ ຄື ໃຫ້ມີສັຈທັມຕັ້ງໃຈຢ່າງໄດຢ່າທໍາລາຍສັດຈະ ສັດຈະເມື່ອຕັ້ງໃຫ້ຖືກຕອ້ງຕາມອັຄຣະທັມ ແລ້ວ ຈະເກີດເປັນພລັງຂອງຈິດຢ່າງດີຢຽ້ມ ພວກເຮົາທັງຫລາຽຕັ້ງໜ້າຕັ້ງຕາ

ເຂົ້າມາສູ່ສົມພູ ມີຣົມດວັ້ຽກັນເຊັ່ນນີ້ແລ້ວ ຕອ້ງຕັ້ງໜ້າຕັ້ງຕາຖອດຖອນສິ່ງທີ່ເປັນຂາ້ສືກ
ຕໍ່ຕົນດວັ້ຽກັນ ຢາ່ຖືວາ່ເປັນເຣື້ອງງາ່ຍໆ ຖາ້ຖືວາ່ເປັນເຣື້ອງງາ່ຍແລ້ວ ກິເລດມັນຈະເຂົ້າ
ຫົວເຣົາເຍາະດູຖຸກພວກເຣົາທຸກ ເພາະການທຳຄວາມພຽນບໍ່ໄຊ້ທຸກທີ່ບໍ່ມີຜົນ ເປັນທຸກທີ່
ທຳລົງໄປແລ້ວກຸ້ມຄາ່ເຣົາຢາ່ໄປທໍ້ຖອຍຈົ່ງອົດທົນຕໍ່ສູ້ອຸປສັກຕາ່ງໆ ການປຣາບປຣາມ
ກິເລດກໍ່ຄືການແກ້ຄວາມບໍ່ດີທີ່ສະຖິດຢູ່ພາຍໃນຕົວຂອງເຣົາຈົ່ງຕອ້ງທຳດວ້ຽຄວາມພຽນ
ຂອງບູຣຸດ ທຳດວ້ຽຄວາມຕັ້ງຈິດຕັ້ງໃຈແທ້ໆ ທຳດວ້ຽຄວາມພາກພຽນແທ້ໆ ໜັກກໍ່ສູ້ເບົາ
ກໍ່ສູ້ເຊັ່ນດຽວກັບເຣົາຕົກນໍ້າ ເຣົາຕອ້ງພະຍາຍາມແຍກອອຍຊວ່ຍຕົນເອງກຳລັງວັງຊາມີ
ທໍ່ໄດເອົາມາຮວ່ມກັນເບີດ ເພື່ອຈະເອົາຕົວຣອດ ຈົ່ນກົ່ວຊີວິດຈະຫາບໍ່ໄດ້ເມື່ອບໍ່ໄຫວແທ້ໆ
ຈຶ່ງຈະຍອມຈົມນໍ້າຕາຍ ຫາກມີກຳລັງພຽງພໍຢູ່ຕາບໃດ ຈະບໍ່ຍອມຈົມນໍ້າຕາຍເປັນອັນຂາດ
ອັນນີ້ກໍ່ເຊັ່ນດຽວກັບການຈະທຳຄວາມພຽນ ເພື່ອຫລຸດພົ້ນນັ້ນຈະທຳອໍ້ແອ້ບໍ່ໄດ້ ຕອ້ງທຳ
ຈິງໆຈັງໆ ຈຶ່ງຈະເຫັນຄວາມຈິງທີ່ພຣະພຸທເຈົ້າຕັດເອົາໄວ້ ເຣົາມາຢູ່ຮວ່ມກັນຫລາຽຈົ່ງ
ປະພຶດປະຕິບັດຕາມທັມຕາມວິໃນຢາ່ງເຄັ່ງຄັດຢາ່ເປັນຄົນມັກງາ່ຍ ວັນນຶ່ງຄືນນຶ່ງຜາ່ນໄປ
ຜາ່ນໄປຢູ່ເຣື້ອຍໆ ສັງຂານຫາ່ງກາຍນັບເວລາທີ່ຈະຜາ່ນໄປໆໂດຍລຳດັບ ພວກເຣົາຢາ່
ປອ່ຽໃຫ້ວັນຄືນລວ່ງໄປເລີຍໆ ຕອ້ງໃຫ້ມັນຜາ່ນໄປດວ້ຽການປະຕິບັດທັມ ການປະຕິບັດ
ທັມກໍ່ເພື່ອຈະກຳຈັດສິ່ງປອມແປງນັ້ນອອກໃຫ້ເຫລືອແຕ່ຂອງຈິງ ຄືແກ່ນແທ້ຂອງທັມສະ
ເພາະຢາ່ງຍິ່ງຄືການຫັດພາວະນາຄວນຈະທຳໃຫ້ເກີດໃຫ້ມີຄວາມແທ້ຈິງ ງານຢາ່ງອື່ນ
ເຣົາກໍ່ເຄີຍຕໍ່ສູ້ມາແລ້ວຕັ້ງແຕ່ໃຫລໆ ກໍ່ຕໍ່ສູ້ກັບງານໜັກງານເບົາມາແລ້ວ ຈົ່ນກະທັ້ງເວ
ລາຜາ່ນມາຈົ່ນບັດນີ້ ເຣົາກໍ່ທຳໄດ້ມາເຣື້ອຍໆແຕ່ເວລານີ້ເຣົາຈະຝຶກຫັດພາວະນາ ຄືການ
ທຳຈິດໃຈໂດຍສະເພາະແລະການທຳພາວະນານີ້ກໍ່ເປັນງານທີ່ຈຳເປັນ ຈະຕອ້ງທຳເຊັ່ນ
ດຽວກັບງານຊິ້ນອື່ນໆ ຫຼືຄວນທີ່ຈະທຳໃຫ້ໜັກຍິ່ງໄປກວາ່ງານອື່ນໆ ເສັຽອີກ ເພາະເປັນ
ງານໜັກແລະລະອຽດກວ່າງານທັງຫລາຽ ການທຳພາວະນາແຣກໆ ຈິດຂອງເຣົາຍອ່ມ
ກວາຍແກ່ງດີ້ນຣົນລົ້ມລຸກຄຸກຄານ ເປັນຂອງທັມດາເພາະຈິດຍັງບໍ່ເຄີຍກັບການພາວະ
ນາມາກອ່ນ ຈຶ່ງຖືໄດ້ວາ່ການພາວະນາເປັນງານໃໝ່ຂອງຈິດ ເຖິງຈະຍາກລຳບາກສຳໄດ
ເຣົາຕອ້ງຝຶກເພື່ອທີ່ຈະດຶງກະຊາກລາກຈິດທີ່ກຳລັງຖືກກິເລດຢໍ່າຍີຢູ່ນັ້ນ ໃຫ້ພົ້ນໄພອັນ
ຕຣາຍໃຫ້ເປັນຈິດທີ່ປຣາສຈາກກິເລດເຣື້ອງເສົ້າໝອງ ຈຶ່ງເປັນສິ່ງພວກເຣົາທັງຫລາຽ
ຄວນທຳຢາ່ງຍິ່ງ ເພາະສະນັ້ນໃນໂອກາດຕໍ່ໄປນີ້ຈຶ່ງຈຳເປັນຢາ່ງຍິ່ງທີ່ພວກເຣົາຈະພາກັນ
ມາບຳເພັນພຽນທາງດາ້ນຈິດໃຈ ອັນເປັນຈຸດໝາຽປາຍທາງໃຫ້ເກີດຄວາມສຸກຄວາມ
ສົມຫວັງຂຶ້ນພາຍໃນໃຈຂອງຕົນເອງ ດວ້ຽຈິດພາວະນາເໝື່ອຍແມ່ລຳບາກແມ່ກໍ່ທົນເອົາ

ການປ່ອຍໃຫ້ຈິດຄິດໄປໃນແຜ່ຕ່າງໆ ຕາມອາຣົມຂອງຈິດນັ້ນ ບໍ່ສາມາດທີ່ຈະທຳໃຫ້ເກີດອັນໄດຂື້ນມາ ນອກຈາກໄປຫຼ່ອເກັບຮອບຮອມຄວາມທຸກ ຄວາມຮອ້ນຈາກອາຣົມພາຍນອກມາເຜົາລົນຈິດໃຈຂອງຕົນໃຫ້ວຸ້ນວາຍເດືອດຮອ້ນ ບໍ່ຂາດຣະຍະເທົ່ານັ້ນທ່ານກາ່ວວາ່ສະມາທິກໍ່ຄືການທຳໃຈໃຫ້ສງົບ ສງົບຈາກອັນໄດສງົບຈາກອາຣົມ ເຄື່ອງກໍ່ກວນທັງຫລາຽ ເມື່ອບໍ່ມີອັນໄດມາຣົບກວນຖາ້ເປັນນ້ຳກໍ່ຈະໃສສະອາດ ດຸດນ້ຳຝົນທີ່ຕົກລົງມາຈາກທອ້ງຟາ້ ຍັງບໍ່ມີອາຣົບພາຍນອກມາຣົບກວນ ກໍ່ຈະເປັນຈິດທີ່ໃສສະອາດໝົດຈົດ ແຕ່ຂນະນີ້ຈິດຂອງເຮົາຖືກກິເລດ ຫຼືອາຣົມພາຍນອກເລ່ນງານແທບຈະເອົາຕົວບໍ່ຣອດຢູ່ແລ້ວ ແຕ່ເຮົາຈະມາຝຶກເພື່ອໃຫ້ຈິດສງົບຈາກອາຣົບພາຍນອກເລົ່ານັ້ນ ການທຳນັ້ນຕອ້ງຄອ່ຍເຮັດຄອ່ຍໄປ ຈະກຳນົດເອົາວັນນັ້ນເວລານັ້ນຈະເກີດຜົນແນ່ນອນນັ້ນ ຍອ່ມບໍ່ໄດ້ ເພາະການທຳຈິດໃຫ້ປຣາສຈາກອາຣົມພາຍນອກນັ້ນ ຈະເກີດຜົນແນ່ນອນນັ້ນ ຕອ້ງໄຊ້ເວລາພໍສົມຄວນ ຍິ່ງຖາ້ເຮົາບໍ່ເຄີຍຝຶກມາກອ່ນຈະເປັນການລຳບາກຫລາຽທີ່ສຸດ ແຕ່ກໍ່ເຫລືອວິໄສທີ່ເຮົາຈະທຳ ໃນຂັ້ນແລກຂອງການປະຕິບັດນັ້ນ ທາ່ນສອນໃຫ້ຍຶດເອົາຂໍ້ອົດຂໍ້ທັມບົດໄດບົດນຶ່ງ ເປັນອາຣົມບົດໄດກໍ່ໄດ້ສຳລັບເປັນເຄື່ອງກຳກັບຄວາມຄຸມໃຈ ບໍ່ເຊັ່ນນັ້ນຈິດຈະອອກແວກໄປສູ່ອາຣົມຕາ່ງໆ ທີ່ເຮົາເຄີຍຊິນກັບອາຣົມນັ້ນໆ ແລ້ວກໍ່ ຄວາມທຸກໃຫ້ເປັນທີ່ເດືອດຮອ້ນຢູ່ສເມີ ທາ່ນຈຶ່ງສອນໃຫ້ນຳບົດທັມມະຂໍ້ໄດຂໍ້ນຶ່ງ ມາເປັນອາຣົມ ເຊັ່ນເຮົາພາວະນາບໍຣິກັມວາ່-ພຸທໂທໆ-ທັມໂມໆ-ຫຼື ສັງໂຄໆ ຫຼືຈະກຳໜົດໃຫ້ມີອານາປານະສະຕິ ຄືການກຳໜົດລົມຫາຽໃຈເຂົ້າອອກຄວບຄູ່ໄປດວັຽກໍ່ໄດ້ ເຊັ່ນຈະບໍຣິກັມວາ່ ພຸທ ເຂົ້າ ໂທອອກ-ດັ່ງນີ້ຄຳວາ່ເຂົ້າອອກກໍ່ຄືໝາຽກຳໜົດກອງລົມນັ້ນເອງ ຫາຽໃຈເຂົ້າກໍ່ກຳໜົດວາ່-ພຸທ-ຫາຽໃຈອອກກໍ່ກຳໜົດວາ່-ໂທ-ດັ່ງນີ້ ແລະໃນຂນະທີ່ບໍຣິກັມເຮົາຕອ້ງມີສະຕິຄວບຄຸມໄປດວັຽ ເມື່ອເຮົາມີສະຕິຕາມຣະນຶກຢູ່ໂດຍການເປັນໄປຕິດຕໍ່ໂດຍລຳດັບ ຈິດກໍ່ບໍ່ມີໂອກາດຈະແວະໄປກຽ່ວຂອ້ງກັບອາຣົມພາຍອອກ ຈິດກໍ່ຈະຄອ່ຍຢາ່ງເຂົ້າສູ່ຄວາມສງົບໂດຍລຳດັບ ຈິດໃຈຂນະນັ້ນຈະມີຄວາມສງົບຫລາຽໃນຂນະຈິດສງົບບໍ່ຫຍຸ້ງເຫຍືອງວຸ້ນວາຍ ການເວລາແລະສະຖານທີ່ຈະບໍ່ມີເລີຍ ໃນຂນະນັ້ນຈິດຈະສງົບຢາ່ງດຽວ ເພາະຈິດທີ່ສງົບຈະບໍ່ສຳຄັນມັນຫລາຽ ຕິດຢູ່ກັບສະຖານທີ່ການເວລາທີ່ໃສເລີຍ ມີແຕ່ຄວາມຮູ້ທີ່ທົ່ງຕົວຢູ່ເທົ່ານັ້ນ ອັນນີ້ເອີ້ນວາ່ຄວາມສຸກທີ່ເກີດຂື້ນຈາກການພາວະນາ ຈະເອີ້ນວາ່ເປັນຜົນຈາກການພາວະນາກໍ່ໄດ້ ເຮົາຢູ່ໃນໂລກນີ້ເຮົາຕອ້ງຢູ່ໃຫ້ສລາດປະກອບດວັຽປັນຍາແລະຈິດໃຈ ຜົນບໍຣິສຸດ ຕົວເຮົາຮູ້ວາ່ເຮົາປະຕິບັດຜິດບໍ່ຖືກຕອ້ງ

ຕາມຫລັກຄຳສອນຂອງພຣະພຸທເຈົ້າ ຕອ້ງພະຍາຍາມແກ້ໄຂທີ່ຕົວເຮົາໃຫ້ຖືກຕອ້ງ ຄື ເຮົາຕອ້ງຫາອຸບາຍວິທີຢູ່ສເມີວາ່ ທຳຢາ່ງໄດຕົນເອງຈື່ງຈະຢູ່ໃຫ້ເປັນສຸກບໍ່ວຸ້ນວາຍໃຈ ອັນນີ້ສຳຄັນຫລາຽທີ່ດຽວ ສີ່ງທັງປວງພຣະພຸທເຈົ້າສອນພວກເຮົາວາ່ຖາ້ໃຜລະຄວາມ ໂລບຄວາມໂກດຄວາມຫລົງ ຫຼືກຳຈັດຄວາມໂລບຄວາມໂກດຄວາມຫລົງເສັຽໄດ້ ຜູ້ ນັ້ນຈະພົບເຫັນພຣະນິພພານ ພຣະນິພພານຢູ່ເໜືອຄວາມໂລບໂກດຫລົງ ທາ່ນວາ່ຢາ່ງ ນີ້ຄວາມໂລບ ໂກດ ຫລົງ ເປັນຮາກເໜົ້າຂອງໂລກ ຊາດໄດ ພາສາໄດ ກໍ່ມີສີ່ງທັງ ສາມນີ້ທຸກຄົນໜີບໍ່ພົ້ນ ມີບັນຫາຢູ່ຖາ້ທຸກຄົນມີຄືກັນແລ້ວຢາ່ງນີ້ຈະທຳປະການໄດດີ ບໍ່ຄິດຈະລະສີ່ງເຫົ່ານີ້ຫຼື ບາງຄົນຖາ້ຈະລະມັນອອກໄປກໍ່ຍັງເສັຽດາຽມັນຢູ່ ຄືວາ່ມັນ ເປັນມິດທີ່ດີຕໍ່ເຮົາຢູ່ ບໍ່ຍອມໃຫ້ມັນຕີຕົວອອກຈາກເຮົາເລີຍ ອັນນີ້ກໍ່ໄດ້ຊື່ວາ່ເຮົາໂງ່ ກວາ່ກິເລດ ເພາະປອ່ຽໃຫ້ກິເລດເປັນນາຍເຮົາ

<u>**ຕຳນານນະໂມ-24**</u>

ອະທິບາຍສັມມາສັມພຸທໂທໃນພຣະທັມມະເທສນາພຣະພຸທຄຸນ ໃວ້ດັ່ງນີ້ **ສັມມາສັມພຸທໂທ** ແປລຕາມສັບວາ່ **ຕັສຣູ້ດວ້ຍພຣະອົງເອງໂດຍຊອບ**ຫຼືໃນນື່ງວາ່ຕັສຣູ້ ເອງໂດຍຖືກຕອ້ງ ຫຼືເວົ້າໃຫ້ສັ້ນກໍ່ວາ່ **ຣູ້ຖືກເອງ** ເພື່ອໃຫ້ໄກ້ກັບພາສາສາມັນທີ່ໄຊ້ກັນວາ່ **ຣູ້ຜິດຣູ້ຖືກ**-ໄດ້ແກ່ຄຳທີ່ເວົ້າຕິຕຽນຄົນທີ່ທຳອັນໄດຜິດພາດໄປ ວາ່ເປັນຄົນບໍ່ຣູ້ຖືກບໍ່ຣູ້ຜິດ ທຳໄປຢາ່ງໂງ່ໆດັ່ງນີ້ເປັນຕົ້ນ-ແຕ່ແທ້ຈິງ-**ພຸທໂທ**-ຄຳນີ້ເມື່ອວິເຄາະໃຫ້ລຶກຊື້ງລົງໄປຣູບ ສັບແລ້ວ ມີຄວາມໝາຽລຶກຊື້ງຫລາຽຕາ່ງກັນໄກກັບຄຳວາ່-**ຊານະ** ຫຼື**ວິຊານະ**-ຊື່ງແປລ ວາ່-**ຣູ້ແຈ້ງ**-ນັ້ນ ດັ່ງນັ້ນ **ພຸທໂທ** ຈື່ງໄດ້ແປລກັນວາ່ຕັສຣູ້ ບໍ່ໄຊ້ເລີຍໆ ເຕີ້ມຕົ້ນຄຳວາ່ **ຕັສ** ນຳໜາ້ **ຣູ້** ຊື່ງສະກິດໃຫ້ສົນໃຈວາ່ ຣູ້ ກັບ ຕັສ 2 ຄຳນີ້ ມີຄວາມໝາຽເລິກຕື້ນກວາ່ກັນ ໂດຍບໍ່ສົງໃສ ເມື່ອຣະນຶກເຖີງພຣະບາລີໃນ **ທັມມະຈັກກັບປວັດຕົນສູ່ຕົນ** ທີ່ວາ່ **ຈັກຂຸ ອຸທປາທີຍານ ອຸທປາທີປັນຍາ ອຸທປາທີວິຊຊາ ອຸທປາທີອາໂລໂກ ອຸທປາທີ**-ຈື່ງທຳໃຫ້ ແລເຫັນຄວາມວາ່ຄຸນວິເສດທັງ 5 ຢາ່ງດັ່ງບາລີທີ່ຍົກຂື້ນກາ່ວນີ້ ຈະເປັນຄວາ່ມໝາຽ ແຫ່ງຄຳວາ່ພຸທໂທກາ່ວຄື **ຈັກຂຸຍານປັນຍາວິຊຊາອາໂລໂກ** ທັງ 5 ຢາ່ງນີ້ປະມວນເຂົ້າ ດວ້ຍກັນຣວມເປັນຄຳແປລຂອງຄຳວາ່ພຸທໂທ ຫຼືຈະແປລໃຫ້ສັ້ນເຂົ້າອີກໃນຄຳວາ່ພຸທໂທ ກໍ່ຍັງຕອ້ງແປລວາ່ **ທັງຣູ້ທັງເຫັນ** ບໍ່ໄຊ້ຣູ້ເສີຍໆ ອາໃສຄຳວາ່ **ຈັກຂຸຍານ**ໃນບາລີທີ່ຍົກຂື້ນ ກາ່ວມານັ້ນເປັນເຄື່ອງປະກອບ ຍີ່ງກວາ່ນັ້ນຍັງມີຄຳວາ່ **ຊານຕາປັສສຕາ** ໃນ **ມະຫາສະ ຕິປັນທະຖານສູ່ຕ່** ຢູ່ອີກຊື່ງເປັນເຫດສນັບສນູນວາ່ທີ່ວາ່ພຣະພຸທເຈົ້າຕັສຣູ້ນັ້ນ ບໍ່ໄຊ້ຣູ້ເສີຍໆ ເປັນທັງຣູ້ທັງເຫັນ ທີ່ວາ່ **ເຫັນ** ນັ້ນບໍ່ໄດ້ໝາຽຄວາມວາ່ເຫັນກັບຕາເຮົາເຫັນອັນໄດແທ້ໆ

ແຕ່ພຣະອົງເຫັນດ້ວຍຕາທັມມະກາຍ ແລະການທີ່ພຣະອົງເຫັນນີ້ ໂດຍບໍ່ໄດ້ມີຜູ້ໃດສອນ ໃຫ້ຮູ້ສອນໃຫ້ເຫັນ ຮູ້ເຫັນໂດຍລຳພັງພຣະອົງເອງແລະສິ່ງທັງຫລາຽ ທີ່ພຣະອົງຮູ້ເຫັນນັ້ນ ຕົງຕາມຄວາມເປັນຈິງທັງນັ້ນ ບໍ່ໄຊ້ຄາດຄະເນຫຼືປະມານເອົາ ຈຶ່ງເປັນ **ອົງສັມມາສັມພຸທ ໂທພຣະຜູ້ຕັສຮູ້ເອງໂດຍຊອບ** ຫຼືຄວາມນຶ່ງວ່າໂດຍຖືກຕອ້ງຕົງຕາມຄວາມເປັນຈິງທຸກປະ ການ ຈຶ່ງໄດ້ຊື່ວ່າ **ຕັສຮູ້** ຍັງມີອີກຄຳນຶ່ງວ່າ **ສັມ** ນຳໜ້າ **ພຸທທະ** ເຕີມເຂົ້າມາອີກຄຳນຶ່ງ ຊຶ່ງແປລວ່າດວ້ຽພຣະອົງເອງ ຄືບໍ່ຕອ້ງມີຜູ່ສັງສອນ- ພຣະອົງທຳຢ່າງໃດຈຶ່ງຕັສຮູ້ດວ້ຽ ຕົນເອງເຊັ່ນນັ້ນຂໍ້ນີ້ ຕອບບໍ່ຍາກ ຄືພຣະອົງຕັສຮູ້ດວ້ຽພຣະອົງເອງໄດ້ ກໍ່ເພາະຄວາມ ເປັນ **ອໍຣະຫັນ** ຂອງພຣະອົງດັ່ງກາ່ວຂາ້ງຕົ້ນແລ້ວນັ້ນເອງ ຄືເມື່ອອຳນາດສະມາທິທຳໃຫ້ ຈິດຂອງພຣະອົງຫລຸດພົ້ນຈາກວາຣະແລ້ວ ຈິດຂອງພຣະອົງກໍ່ໃສຍິ່ງຫລຸດ ແລະບໍຣິສຸດ ຜຸດຜອ່ງເພາະຫລຸດນີ້ງນັ້ນເອງ ຈຶ່ງມີສິ່ງນຶ່ງຫລຸດຂຶ້ນໃນນຶ່ງທຳໃຫ້ຮູ້ພຣະອົງກໍ່ຮູ້ຕາມນັ້ນ ໄປ ນ້ຳຂຸ່ນແມ່ນມີຫີນຈັກກອ້ນນຶ່ງຢູ່ໃຫ້ໂອ່ງນັ້ນ ເຮົາກໍ່ແນມບໍ່ເຫັນ ແຕ່ຖາ້ນ້ຳນັ້ນນອນນີ້ງ ໃສບໍຣິສຸດແລ້ວ ແມ່ນແຕ່ເຂັມຢູ່ກົ້ນໃຫ້ໂອ່ງເຮົາກໍ່ເຫັນສັນໃດກໍ່ເຫັນສັນນັ້ນ- ຍັງມີອີກຄຳ ວາ່ **ສັມມາ** ນຳໜ້າ **ສັມພຸທໂທ**ອີກຄຳນຶ່ງ ຄືຄຳວາ່ **ສັມມາ** ແປລວາ່ **ໂດຍຊອບ** ຫຼື **ໂດຍ ຖືກຕອ້ງ** ພຣະອົງຕັສຮູ້ອັນໃດມີເຫດຜົນຢັນກັນສເມີ ຈຶ່ງໄດ້ຊື່ວ່າຖືກຕອ້ງເພາະການເວົ້າ ອັນໃດບໍ່ມີເຫດຜົນຮັບສົມຫຼືຢັນກັບໄດ້ແລ້ວ ຕາມຫລັກທັມມະດາເອີ້ນວາ່ບໍ່ຖືກ ຕອ້ງມີເຫດ ຜົນຮັບສົມກັນຢູ່ສເມີ ບໍ່ຄາດເຄື່ອນຈຶ່ງສົມຄວນແລ້ວຈຶ່ງໄດ້ພຣະເນດນາມວາ່ ສັມມາສັມ ພູທໂທ ພຣະພຸທວັຈນະທີ່ຄວນນຳມາເວົ້າໃນທີ່ນີ້ ວ່າແຕ່ໂດຍສັ້ນໆ ກໍ່ວາ່ພຣະອົງຕັສຮູ້ ເຫດຕັສຮູ້ຜົນບໍ່ໄຊ້ຮູ້ແຕ່ເຫດຫຼືຮູ້ແຕ່ຜົນພຣະອົງຕັສຮູ້ທັງເຫດຕັສຮູ້ທັງຜົນ ອັນທີ່ວາ່ນີ້ຄື ອັນໃດ ຄືເຫດສຸຂເຫດທຸກ ເຫດບໍ່ສຸຂເຫດບໍ່ທຸກຫຼື ທີ່ເອີ້ນວາ່ອັພຍາຄົດ ຄືສະພາບເປັນ ກາງໆ ທັງ 3 ຢາ່ງນີ້ເປັນຮາກຖານແຫ່ງການຕັສຮູ້ຂອງພຣະອົງ ກາ່ວຄື ສຸຂ ພຣະອົງ ກໍ່ບໍ່ຊົງຮູ້ແຕ່ສຸຂເສີຍໆ ຕັສຮູ້ລືກຊຶ່ງເຂົ້າໄປເຖິງວາ່ອັນໃດເປັນເຫດໃຫ້ເກີດສຸຂດວ້ຽແລະ ອີກ 2 ປະການນັ້ນກໍ່ເຊັ່ນດຽວກັນ ຮູ້ທັງເຫດຮູ້ທັງຜົນຄູ່ກັນໄປເປັນຕົ້ນວາ່ ສຸຂເປັນຜົນຄື ຄວາມສະບາຍກາຍສະບາຍໃຈ ອັນໃດເລົ່າເປັນເຫດທີ່ໃຫ້ເກີດຜົນ ຄືສຸຂດັ່ງກາ່ວນັ້ນ ພຣະ ອົງຕັສຮູ້ໄວ້ວາ່ **ອະໂລພະ ອະໂທສະ ອະໂມຫະ** ບໍ່ໂລບບໍ່ໂກດບໍ່ຫລົງ( ແປລວ່າຢາ່ງຢູ່ທີ່ ສຸດ ) 3 ປະການນີ້ແລະເປັນເຫດ ດັ່ງມີບາລີເປັນທີ່ຢືນຢັນວາ່ **ກຸສລາທັມມາອະກຸສລາ ທັມມາອະພະຍາກະຕາທັມມາ** ເປັນອາທິ ໂລບໂກດຫລົງເປັນຝາ່ຍກຸສົນ ຕັດວາ່ເປັນເຫດ ແຫ່ງທຸກ ເຮົາປຸຖຸຊົນມັກຮູ້ກັນແຕ່ຜົນສາວຫາເຫດບໍ່ຄິດເຖິງ ເຊັ່ນຄົນທຳໂຈຣະກັມແລ້ວ ໄປຕອ້ງໂທດຢາ່ງຫລາຽ ທີ່ຮູ້ກັນທົ່ວໄປຢູ່ໃນຊັ້ນຫລາຍໆ ວາ່ຜົນທີ່ຕອ້ງໄດ້ຮັບທຸກ

ຄື ການຕອ້ງໂທດນັ້ນເນື່ອງມາຈາກໂຈຣະກັມ ແຕ່ແທ້ຈິງແລ້ວເຫດເທົ້ານັ້ນຍັງບໍ່ພໍ ຕອ້ງສາວເຂົ້າໄປອີກ ເປັນຫຍັງເຂົາຈຶ່ງທຳໂຈຣະກັມ ກໍ່ຈະໄດ້ຄວາມວ່າເພາະໂລພະເປັນມູນເຫດ ແຕ່ກໍ່ຍັງບໍ່ພໍຕອ້ງສາວເຂົ້າໄປອີກວ່າ ເປັນຫຍັງໂລພະຈຶ່ງຄອບງຳເຂົາໄດ້ກໍ່ຈະໄດ້ຄວາມວ່າ ຈິດໃຈຂອງເຂົາສົກະປົກເປັນຫຍັງຈິດໃຈຂອງເຂົາຈຶ່ງສົກະປັກ ຈຶ່ງໄດ້ເຫດວ່າເພາະເຂົາບໍ່ປະພຶດຕາມໂອວາດພຣະບໍຣົມສາສດາ ຢ່າງນອ້ຍກໍ່ເປັນຄົນທຸສິນ ອະທິນນາທານ-ຂາດໄປເສັຽອົງນຶ່ງແລ້ວ ເຫດໃດເຂົາຈຶ່ງເປັນຄົນທຸສິນ ກໍ່ຄືຈະໄດ້ຄວາມວ່າ ເຂົາບໍ່ຮູ້ເຣື້ອງສິນຫຼື ຮູ້ແລ້ວບໍ່ນຳພາ ເປັນຫຍັງຈິງບໍ່ຮູ້ເຣື້ອງສິນ ກໍ່ອາດເປັນເພາະເຫດທີ່ເຂົາບໍ່ເຄີຍອ່ານໜັງສື ທາງພຣະພຸທສາສນາ ຫຼືສລັບຮັບຟັງພຣະທັມມະເສນາ ດັ່ງນີ້ເປັນຕົ້ນພຣະອົງຊົງສອນໄວ້ລະອຽດທີ່ຖອ້ນວ່າ ໃຫ້ຮູ້ເທົ້າເຖິງເຫດຜົນຮູ້ວ່າຜົນນີ້ເກີດຈາກເຫດໃດ ພຣະອົງມີແນວສອນໃຫ້ປະຕິບັດ ເພື່ອລະເຫດທີ່ໃຫ້ເກີດທຸກ ບຳເພນເຫດທີ່ໃຫ້ເກີດສຸຂຕຣອດຈົນວິທີທາງດັບເຫດທັງປວງ-ຊຶ່ງເອີ້ນວ່າ-**ນິໂຣທ**-ເພື່ອຮັບສນອງຂໍ້ຄວາມດັ່ງກ່າວມາ ກໍ່ມີຖອ້ຽຄຳຂອງພຣະອັສຊິເຖຣະເປັນລັກຖານສນອງຮັບຮອງພຣະພຸທເທສນາດັ່ງມາ ຄືພາຍຫລັງ ແຕ່ສົມເດັດພຣະສັມມາສັມພຸທເຈົ້າຕັສຮູ້ໃໝ່ໆ ພຣະອັສຊິເຖຣະຊຶ່ງເປັນພຣະສາວົກໄປປະພາສພຣະສາສນາ ໄປພົບອຸປຕິສົສປຣິພພາຊົກ ອຸປຕິສົສປຣິພພາຊົກ ຕັ້ງກະທູ້ຖາມກັນສັ້ນໆ ເຖິງເຣື້ອງພຣະສາສດາວ່າ ຊົງສັ່ງສອນຢ່າງໃດ ພຣະອັສຊິໄດ້ຕອບວ່າຊົງສອນເຖິງເຫດແລະວິທີທາງທີ່ຈະດັບເຫດເຫລົ່ານັ້ນ ດັ່ງພຣະບາລີວ່າ **ເຍທັມມາເຫຕຸພະຄະວາ ເຕສະ ເຫຕຸ ຕະຖາຄະໂຕ** ຫຼືເວົ້າຢ່າງສັ້ນໆອີກໃນນຶ່ງວ່າ ພຣະອົງສອນໃຫ້ຮູ້ວ່າອັນໃດຊົ່ວອັນໃດດີ ອັນໄດ້ເປັນເຫດແຫ່ງຄວາມຊົ່ວຫຼືຄວາມເສື່ອມ **ອະໂລພະ ອະໂທສະ ອະໂມຫະ** ເປັນເຫດແຫ່ງຄວາມດີຫຼືຄວາມຈະເຣີນພຣະອົງຊົງສອນວ່າ ກອ່ນຈະເວົ້າຈະຄິດຫຼືທັມສິ່ງໃດຈົ່ງມີສະຕິ ຫຼືທີ່ເອີ້ນວ່າໄຊ້ຄວາມຄິດໃນຈິດໃຈແລະປັນຍາ ໃຫ້ຮອບຄອບເສັຽກອ່ນຈຶ່ງເວົ້າຈຶ່ງຄິດຈຶ່ງທຳການນັ້ນໆ ແລວ່າໂດຍສະເພາະຈົ່ງຣະວັງເຣື້ອງ **ໂລພະໂທສະ ໂມຫະ** ນັ້ນໄວ້ຢ່າໃຫ້ເຂົ້າຄອບງຳໄດ້ ໃນເມື່ອຈະທຳເວົ້າແລະຄິດການສິ່ງໃດ ພຣະອົງຊົງສອນໄວ້ໃນທາງປະຣະມັດຖະວ່າ ທັມມະດາຈິດນັ້ນໃສບໍຣິສຸດຢູ່ສເມີ ຊຶ່ງໝາຽຄວາມວ່າ ຈິດທີ່ບໍ່ມີກິເລດຜສົມ ສວ່ນພວກກິເລດເຊັ່ນ ໂລພະ ເອີ້ນວ່າເປັນຂອງໂຈນມານ ເມື່ອມາຟອ້ງພານຈິດກໍ່ຍອ້ມຈິດໃຫ້ເປັນໄປຕາມສະພາບອັນຊົ່ວຊ້າຂອງກິເລດນັ້ນໆຈິດຂອງແຕ່ຣະຄົນດວ້ຽ **ຣາຄະ** ຫຼື **ໂລພະ** ມີສີແດງ ແຕ່ຣະຄົນດວ້ຽ **ໂທສະ**ມີ ສີດຳແຕ່ຣະຄົນດວ້ຽ **ໂມຫະ** ຂຸ່ນເໝືອນຂີ້ຕົມຫຼືນ້ຳລ້າງເນື້ອ ສິ່ງເລົ່ານີ້ພຣະອົງໄຊ້ຕາທັມມະກາຍແນມເຫັນແທ້ໆ ພວກເຮົາເລົ່າສາຊະນິກະຊົນເມື່ອຮຽນພາວະນາ

ເຖິງຂນາດຈະເຫັນແຫ້ດວັຽຕົນເອງ ການປະຕິບັດຈິດທາງພາວະນານັ້ນກໍ່ຄື ພະຍາຍາມ ກັ່ນເອົາກິເລດອອກເສັຽຈາກຈິດ ໃຫ້ຈິດບໍຣິສຸດອັນໄດ້ຊື່ວ່າກິຣິຍາຈິດ ກິຣິຍາຈິດເຊັ່ນນີ້ ເປັນອັພຍາ ກະຖະຕະແລ້ວ ຕໍ່ນັ້ນໄປຈະເປັນຈິດທີ່ຄວນແກ່ການທຸກຢ່າງ- ພຣະທັມມະ ເທສນາຂອງພຣະອົງເມື່ອຕອນຕັສຮູ້ໃໝ່ໆ ໜັກໄປໃນທາງສແດງເຫດແລະການດັບເຫດ ຫຼື ທີ່ເອີ້ນວ່າ **ສມຸທັຍ** ກັບ ນິໂຣທ ດັ່ງເຊັ່ນໃນການໃຫ້ພິຈາຣະນາເຣື່ອງສັງຂານໃນດ້ານ ສມຸທັຍ ວ່າ **ອະວິຊຊາປັຈຈຸປັນຍາ ສັງຂາຣາ** ແລະໃນດ້ານ **ນິໂຣທ** ວ່າ **ອະວິຊຊາເຕອະ ເສສວິຣາຄະນິໂຣທາ** ໃນດ້ານ **ສມຸທັຍ** ນັ້ນແປລຄວາມເປັນພາສາລາວວ່າ ອະວິຊຊາ ເປັນປັດໃຈໃຫ້ເກີດສັງຂານ ສັງຂານເປັນປັດໃຈໃຫ້ເກີດວິນຍານ-ວິນຍານເປັນປັດໃຈໃຫ້ ເກີດນາມຮູບ-ນາມຮູບເປັນປັດໃຈໃຫ້ເກີດອາຍົຕນະ 6-ອາຍົຕນະ 6 ເປັນປັດໃຈໃຫ້ເກີດ ຜັສສະ-ຜັສສະ ເປັນປັດໃຈໃຫ້ເກີດເວທນາ-ເວທນາ ເປັນປັດໃຈໃຫ້ເກີດຕັນຫາ-ຕັນຫາ ເປັນປັດໃຈໃຫ້ເກີດອຸປທານ-ອຸປທານເປັນປັດໃຈໃຫ້ເກີດພົບ-ພົບເປັນປັດໃຈໃຫ້ເກີດຊາດ ຊາດເປັນປັດໃຈໃຫ້ມີຄວາມແກ່ຄວາມຕາຍແລະຄວາມເສົ້າໂສກຕ່າງໆ ສິ່ງເລົ່ານີ້ຈະດັບ ໄດ້ເພາະຊາດດັບ-ຊາດດັບໄດ້ກໍ່ເພາະພົບດັບ-ພົບຈະດັບໄດ້ກໍ່ເພາະອຸປທານດັບ-ອຸປທານ ຈະດັບໄດ້ເພາະຕັນຫາດັບ-ຕັນຫາຈະດັບໄດ້ກໍ່ເວທນາດັບ-ເວທນາຈະດັບໄດ້ເພາະຜັສສະ ດັບ ຜັສສະດັບຈະດັບໄດ້ກໍ່ຕໍ່ເມື່ອອາຍະຕະນະດັບ-ອາຍະຕະນະຈະດັບໄດ້ກໍ່ຕໍ່ເມື່ອນາມ ຮູປດັບ-ນາມຮູບຈະດັບໄດ້ກໍ່ຕໍ່ເມື່ອວິນຍານດັບ-ວິນຍານຈະດັບໄດ້ກໍ່ຕໍ່ເມື່ອສັງຂານດັບ ສັງຂານຈະດັບລົງໄດ້ກໍ່ເພາະອະວິຊຊາດັບ-ເຫດຜົນເກີດດັບກຽ່ວຂອ້ງກັບເປັນລູກໂສ້ ເສັ້ນນີ້ ເອີ້ນວ່າ **ປັຈຈະຍາການ** ທີ່ພຣະອົງໄດ້ຮູ້ແຈ້ງແທ້ຕຣອດໃນວັນຕັສຮູ້ນັ້ນທັງຂຶ້ນພິ ຈາຣະນາຕາມລຳດັບດັ່ງທີ່ຍົກຂຶ້ນກ່າວມາຂ້າງເທິງນັ້ນ ເມື່ອຢອັນໃຫ້ໄດ້ຄວາມເຂົ້າໃຈ ອັນຈະເປັນຜົນໃນທາງປະຕິບັດແລ້ວກໍ່ມີຕົວສຳຄັນອັນດຽວຄື **ອະວິຊຊາ** ເປັນມູນຮາກ ຝ່າຍເກີດຫຼືທີ່ເອີ້ນວ່າສມຸທັຍແລະໃນທາງດັບຫຼື ທີ່ເອີ້ນວ່າ**ນິໂຣທ** ກໍ່ທຳນອງດຽວກັນ ອະວິຊຊາ ເທົ່ານັ້ນເປັນຕົວການສຳຄັນ ຖ້າດັບອະວິຊຊາໄດ້ຢ່າງດຽວ ສ່ວນອື່ນໆ ນັ້ນ ດັບຮຽບເບີດ ເພາະອະວິຊຊາເໝືອນຕົ້ນໄຟ ແຕ່ຖ້າຍັງດັບອະວິຊຊາບໍ່ໄດ້ ແລ້ວກໍ່ບໍ່ມີ ຫວັງວ່າຢ່າງອື່ນຈະດັບໄດ້ ຄວາມໝາຽທີ່ສຳຄັນໃນຄຳສອນຂອງພຣະອົງຈຶ່ງຢູ່ທີ່ວ່າ ໃຫ້ຜູ້ປະຕິບັດພຽນຫາທາງກຳຈັດອະວິຊຊາເສັຽຈຶ່ງຈະພົ້ນຈາກວັງເລີກຄືອະວັດຖະສົງ ສານໄດ້ ອະເນກະຊາຕິສະສາຣະ ໃນຂນະເມື່ອແສງທອງເຮືອງແຂ່ງແສງເງິນຂຶ້ນມາ ຍັງຂອບຟ້າເບື້ອງບູຣະພາອັນເປັນສັນຍາວ່າດວງອາທິດຕຽມທຳໜ້າທີ່ຈະສ່ອງໂລກຢູ່ ແລ້ວ ເປັນເວລາທີ່ອາກາດຍະເຢືອກເຢັນສົດຂຶ້ນສົ່ງໃຫ້ເຮົາຫວນໄປຣະລຶກເຖິງ

ເວລາຮຸ່ງອາລຸນແຫ່ງວັນເພັນວິສາຂະມາດ ອັນເປັນວັນທີ່ພຣະບໍຣົມໂລກນາຄອນທັດຕະສັມມາສັມພຸທເຈົ້າ ຕັສຣູ້ອະນຸດຕະສັມມາສັມໂພທິຍານນັ້ນ ເຮົາຈະແລເຫັນໂອພາດຣັສໝີອັນຮຸ່ງໂຣດ ຍິ່ງກວ່າແສງທອງນັ້ນຮອັຽເທົ້າພັນທະວີຊວ່ງໂຊດຢູ່ພາຍໃຕ້ໂພທິສົມພານອັນມະຫາສານໃບຂຽວຊຸ່ມຮັບກັບຣັສໝີອັນເຫຼືອງອາຮ່າມຢູ່ພາຍໃຕ້ນັ້ນ ໃນໃຈກາງແຫ່ງຣັສໝີອັນຊວ່ງໂຊດຊີສວາມຢູ່ນັ້ນ ບໍ່ໃຊ້ອື່ນໄກຄື ອົງສົມເດັດພຣະສັມມາສັມພຸທເຈົ້າຂອງເຮົາ ປະທັບປຮົ້ມຢູ່ດວ້ຽພຣະອາການອຸ່ນບານພຣະທັຍ ທີ່ໄດ້ສເວີຍວິມຸດຕິສຸຂອັນເປັນຜົນແຫ່ງການທີ່ພຣະອົງໄດ້ຊົງປະກອບພຣະມະຫາປະທາວິຣິຍະມາເປັນເວລາຊ້ານານຈື່ງໄດ້ບັນລຸອະນຸດຕະສັມມາສັມໂພທິຍານສົມດັ່ງພຣະທັຍປະສົງພຣະອົງ ຈື່ງຊົງເປັນພຣະອຸທານເຄັຽຕັນຫາວ່າ **ອະເນກະຊາຕິສະສາຣະ** ດັ່ງທີ່ໄດ້ຍົກຂື້ນກ່າວໄວ້ຂ້າງຕົ້ນນັ້ນຊຶ່ງແປລໃຈຄວາມເປັນພາສາລາວວ່າເຮົາສືບຊອກຫາຕົວຢ່າງນາຍສ່າງໄມ້ ຜູ້ສ້າງປຣະສາດມານານແລ້ວ ເມື່ອເຮົາຍັງຫາບໍ່ພົບເຮົາຕອ້ງທອ້ງທ່ຽວຢູ່ໃນສົງສານວຽນວາຍຕາຍເກີດຢູ່ເທບຈະນັບຊາດບໍ່ຖວ້ນ ການເກີດນຳຄວາມທຸກມາໃຫ້ເຮົາແລ້ວໆບໍ່ຮູ້ຈັກຈົບຊີ້ນ ນີ້ແລະທ່ານນາຍສ່າງໄມ້ກ່າວຄື ຕັນຫາ ບັດນີ້ເຮົາເຫັນເຮົາພໍ້ຕົວທ່ານແລ້ວລະ ທ່ານໝົດໂອກາດທີ່ຈະມາສ້າງປຣາສາດຄື ອັຕພາບຮ່າງກາຍເຮົາຕໍ່ໄປໄດ້ອີກແລ້ວ ກະດູກຊີກໂຄງທ່ານກ່າວຄື ກິເລດເຮົາຫັກສຽກອອກໝົດແລ້ວ ບໍ່ໝໍາຊ້ຳຍອດປຣາສາດກາວຄືອະວິຊຊາເຮົາກໍ່ຮື້ທຳລາຍໝົດຊີ້ນແລ້ວ ຈິດຂອງເຮົາປຣາສຈາກເຄື່ອງປຸງແຕ່ງແລ້ວເຮົາເຖິງຊຶ່ງຄວາມຊີ້ນໄປແຫ່ງຕັນຫາ ພຣະອຸທານນັ້ນມີຂໍ້ຄວາມເປັນບຸກຄະລາທີ່ສະຖານຊັ້ນໆແຕ່ມີອຸດທະລຶກຊຶ່ງໜ້າສົນໃຈເປັນຢ່າງຍິ່ງ ທີ່ແປລຄະຫະກູຖືວ່າຍອດປຣາສາດກໍ່ເພື່ອຄວາມເໝາະສົມທີ່ພຣະອົງເປັນກະສັດເພາະບ້ານເຮືອນຂອງພຣະມະຫາກະສັດນັ້ນເອີ້ນກັນວ່າປຣາສາດຣາຊຖານ ພຣະອົງອຸທານນັ້ນ ມີຂໍ້ຄວາມຊັດເຈນແລ້ວບໍ່ຈຳຕອ້ງອະທິບາຍ- ທຸກຄົນຕ່າງມີໜ້າທີ່ ທຳສວ່ນຕົນແລະທຸກຄົນຄວນຈະພິຈາຣະນາດວ້ຽຕົນເອງແລະໃຊ້ສະຖິຈິດຂອງຕົນໃຫ້ສມັ່ມສເມີ ເພື່ອຈະໃຫ້ຕົນມີຄວາມສຸກຄວາມຈະເຣີນພອ້ມທັງຄອບຄົວຂອງຕົນດວ້ຽເຖີດ

ໃນຄຳສອນຂອງພຣະພຸທສາສນາ ຄົນເຮົາຄວນປະຕິບັດອັນຖືກຕອ້ງແລະເໝາະສົມທ່ານທັງຫລາຽ ຄວນໃຊ້ສະຕິປັນຍາ ດວ້ຍຈິດໃຈອັນບໍຣິສຸດພຸດຜ່ອງດວ້ຍສິນທັມເພື່ອນຳເອົາຄວາມສຸກຄວາມຈະເຣີນ ເຂົາຫາຕົນແລະຄອບຄົວດວ້ຍຕົວເຮົາເອງ

ລູງຈອ່ຍ ອິສຣະ ຜູ້ຄົ້ນຄົ້ວພົບ ທີ່ຫອ້ງສມຸດ ໃນນະຄອນວຽງຈັນ

ຄັ້ງວັນທີ-25-5-00